# ຫົວຂໍ້ວິໄຈ: ການພັດທະນາຄູດ້ານການວິໄຈພາກປະຕິບັດໃນຫ້ອງຮຽນ ສໍາລັບຄູວິທະຍາໄລຄູ ສະຫວັນນະເຂດ, ສປປ. ລາວ

**Title: The Teacher Development on Classroom Action Research at Svannakhet Teacher Training College in Lao PDR.**

**ຜູ້ວິໄຈ:** ກະຕິກາ ຣາຊະບຸດຣ໌
**Researcher:** Katika RAJBOUTRA

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ມີວັດຖຸປະສົງຄື 1) ເພື່ອພັດທະນາຄວາມຮູ້, ຄວາມເຂົ້າໃຈ, ທັກສະໃນການເຮັດການວິໄຈໃນຊັ້ນຮຽນສໍາລັບຄູວິທະຍາໄລຄູສະຫວັນນະເຂດ ສປປ.ລາວ, 2) ເພື່ອປຽບຄວາມຜົນສໍາເລັດທາງດ້ານການຮຽນວິໄຈໃນຊັ້ນຮຽນຂອງຄູວິທະຍາໄລຄູສະຫວັນນະເຂດກ່ອນ ແລະ ຫຼັງການເຂົ້າຮັບການຝຶກອົບຮົມ, 3) ເພື່ອສໍາຫຼວດຄວາມເພິ່ງພໍໃຈຄູວິທະຍາໄລຄູສະຫວັນນະເຂດ ຫຼັງການຮັບການຝຶກອົບຮົມ. ແບບແຜນການວິໄຈຄັ້ງນີ້ແມ່ນການວິໄຈທົດລອງທີ່ມີປະຊາກອນກຸ່ມດຽວໂດຍມີການທົດສອບກ່ອນ ແລະ ຫຼັງດ້ວຍແບບທົດສອບຄູ່ຂະໜານ. ກຸ່ມຕົວຢ່າງທີ່ໃຊ້ໃນຄັ້ງນີ້ແມ່ນຄູທີ່ຈົບການສຶກສາລະດັບປະລິນຍາຕີໃນວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ຈໍານວນ 57 ຄົນ ໄດ້ມາໂດຍການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບມີ 1) ຊຸດຝຶກອົບຮົມການວິໄຈໃນຊັ້ນຮຽນທີ່ສ້າງຂຶ້ນໂດຍ ອຈ ກະຕິກາ ຣາຊະບຸດຣ໌, 2) ບົດທົດສອບຄູ່ຂະໜານແບບປະລາໄນ 50 ຂໍ້ຈານວນ 4 ຕົວເລືອກ, 3) ແບບສອບຖາມຄວາມເພິ່ງພໍໃຈຄູທີ່ມີຕໍ່ການຝຶກອົບຮົມເລື່ອງການວິໄຈໃນຊັ້ນຮຽນ. ວິເຄາະຂໍ້ມູນດ້ວຍການວິເຄາະຜົນຄະແນນຈາກບົດທົດສອບກ່ອນ ແລະ ຫຼັງການຝຶກອົບຮົມ ແລະ ແບບສອບຖາມຄວາມເພິ່ງພໍໃຈຄູ ໂດຍສະຖິຕິທີ່ໃຊ້ໃນການວິເຄາະຄັ້ງນີ້ປະກອບມີ ຄ່າສະເລ່ຍ, ອັດຕາສ່ວນຮ້ອຍ, ສ່ວນຜັນປ່ຽນມາດຖານ ແລະ ຄ່າ t-test dependent.

ຜົນການວິໄຈຄັ້ງນີ້ພົບວ່າ:

ຜົນການວິໄຈທີ 1 ຜົນການສຶກສາຄວາມຮູ້ຄວາມເຂົ້າໃຈຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍພາບລວມ ພົບວ່າ “ຢູ່ໃນລະດັບຍາກຫຼາຍ” **($\bar{X}$ = 3.83, S.D. = 0.82 ).** ຄູສ່ວນໃຫຍ່ຮ້ອຍລະ 80% ຕ້ອງການການຊ່ວຍເຫຼືອໃນການຝຶກອົບຮົມໃຫ້ຄວາມຮູ້ດ້ານການເຮັດການວິໄຈພາກປະຕິບັດ ແລະ ດູແລໃຫ້ຄໍາປຶກສາແນະນໍາການເຮັດການວິໄຈ ພ້ອມກັບການສ້າງຄູມືການເຮັດການວິໄຈ ແລະ ການສ້າງລະບົບການດູແລໃຫ້ຄໍາປຶກສາແນະນໍາ.

ຜົນການວິໄຈທີ 2 ພົບວ່າ ຄວາມຮູ້ຄວາມເຂົ້າໃຈຂອງຄູວິທະຍາໄລສະຫວັນນະເຂດ ສປປ. ລາວ ຫຼັງການເຂົ້າຮັບການຝຶກອົບຮົມ $\left(\bar{X} = 37.20,\ S.D. = 8.08\right)$ ສູງກວ່າກ່ອນການຝຶກອົບຮົມຢ່າງມີຄວາມສໍາຄັນທາງສະຖິຕິທີ່ 0.01.

ຜົນການວິໄຈທີ 3 ພົບວ່າ ຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍລວມຢູ່ໃນລະດັບສູງຫຼາຍ. ສະຫຼຸບລວມແລ້ວ, ການຝຶກອົບຮົມຄູວິທະຍາໄລຄູສະຫວັນນະເຂດ ໂດຍໃຊ້ຊຸດຝຶກອົບຮົມການວິໄຈໃນຊັ້ນຮຽນຂອງ ອຈ ກະຕິກາ ຣາຊະບຸດຣ໌ ແມ່ນສ້າງຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະທີ່ດີໃຫ້ແກ່ຜູ້ເຂົ້າຮ່ວມອັນນີ້ເນື່ອງຈາກຊຸດຝຶກອົບຮົມດັ່ງກ່າວໄດ້ຜ່ານການກວດສອບຄຸນນະພາບຂອງຊຸດຈາກຜູ້ຊ່ານຈໍານວນ 7 ທ່ານຢ່າງເຄັ່ງຄັດຈຶ່ງໄດ້ມາເຊິ່ງຜົນລັບທີ່ໜ້າທີເພິ່ງພໍໃຈ. ຄວາມເພິ່ງພໍໃຈຂອງຄູກໍ່ເປັນການສະທ້ອນຜົນທີ່ດີຢ່າງໜຶ່ງຂອງລະບົບການຝຶກ

ອົບຮົມທີ່ມີການກຽມການເປັນຢ່າງດີເຊິ່ງສະທ້ອນຜົນອອກມາໃນລະດັບດີທີ່ສຸດເປັນສ່ວນໃຫຍ່. ດັ່ງນັ້ນ, ການຝຶກອົບຮົມໃຫ້ຄວາມຮູ້ແກ່ຄູໃໝ່ໃນດ້ານການວິໄຈໃນຊັ້ນຮຽນຈຶ່ງເປັນເລື່ອງຈຳເປັນໃນທຸກສະຖານບັນການສຶກສາເພື່ອປັບຄຸນນະພາບການຮຽນ-ການສອນ ແລະ ການເຮັດການວິໄຈຄວບຄູ່ກັນໄປຢ່າງຕັດແຍກອອກຈາກກັນບໍ່ໄດ້.

**ຄຳສັບສຳຄັນ:** ການພັດທະນາຄູ ການວິໄຈໃນຊັ້ນຮຽນ ຄູວິທະຍາໄລຄູສະຫວັນນະເຂດ

## 1. ພາກສະເໜີ

### 1.1 ຄວາມສຳຄັນຂອງບັນຫາ

ວິທະຍາຄູສະຫວັນນະເຂດເປັນສູນກາງການສຶກສາໃນເຂດພາກກາງຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ສົ່ງເສີມການຄົ້ນຄວ້າວິໄຈ ແລະ ຕອບສະໜອງຜົນງານວິຊາການໃຫ້ສອດຄ່ອງກັບນະໂຍບາຍຂອງພັກ ແລະ ລັດ. ພ້ອມທັງສະໜັບສະໜູນການເຊື່ອຍໂຍງກັບບັນດາປະເທດໃນອາຊຽນ , ພາກພື້ນ, ແລະ ສາກົນ. ອະນຸລັກ ແລະ ສົ່ງເສີມວັດທະນາທຳຮີດຄອງອັນດີງາມຂອງຊາດໄວ້ໃຫ້ແໜ້ນໜາ, ຕັ້ງໜ້າພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດຕາມ 5 ຫຼັກມູນການສຶກສາເພື່ອມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ຂອງປະເທດ (ວິທະຍາໄລຄູສະຫວັນນະເຂດ. 2014: 22).

ການພັດທະນາບຸກຄະລາກອນເປັນການພັດທະນາທີ່ສຳຄັນທີ່ສຸດ ແລະ ຕ້ອງອາໃສວິທີການທີ່ມີປະສິດທິ ພາບເພື່ອປັບປຸງບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ ແລະ ມີທັດສະນະຄຸນສົມບັດທີ່ຖືກຕ້ອງດີງາມໂດຍສະເພາະພັດທະນາບຸກຄະລາກອນຄູດ້ານການເຮັດການວິໄຈພາກປະຕິບັດໃຫ້ມີການພັດທະນາຫຼາກຫຼາຍຮູບແບບ ເຊັ່ນ ການປະຊຸມປະຕິບັດການໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໃນດ້ານທິດສະດີ ແລະ ເກີດທັກສະດ້ານການປະຕິບັດຕົວຈິງຢ່າງແທ້ຈິງ. ການຝຶກອົບຮົມນິເທດຕິດຕາມໃຫ້ຄູມີຄວາມຮູ້ຄວາມສາມາດໃນການເຮັດການວິໄຈພາກປະຕິ ບັດໃນຫ້ອງຮຽນມີເປົ້າໝາຍເພື່ອການເພີ່ມພູນຄວາມຮູ້ຄວາມສາມາດທັກສະໃນການເຮັດການວິໄຈ ແລະ ເປັນການປັບປຸງຄຸນນະພາບຂອງຄູຜູ້ປະຕິບັດໜ້າທີ່ວຽກງານດ້ານການສອນໃຫ້ເກີດປະສິດທິພາບຢ່າງເຕັມທີ່ໃຫ້ກ້າວໜ້າໃນສາຍງານຕາມຄວາມສາມາດຂອງຄູຜູ້ສອນເພື່ອເປົ້າໝາຍສູງສຸດອັນຈະນຳຜົນປະໂຫຍດມາສູ່ຜູ້ຮຽນໂດຍກົງ (ມະຫາວິທະຍາ ໄລມະຫາສາຣາຄາມ. ພ.ສ. 2540. ໜ້າທີ. 156).

ການເຮັດວິໄຈຖືໄດ້ວ່າເປັນຫົວໃຈຂອງການພັດທະນາການສຶກສາ ແລະ ເປັນວຽກງານທີ່ທ້າທາຍຊວນໃຫ້ຄິດ, ຢາກລອງປະຕິບັດ, ຢາກຕິດຕາມ, ເກີດຄວາມກະຕືລືລົ້ນ, ແລະ ຢາກຮູ້ຢາກເຫັນ. ບາງຄັ້ງຕ້ອງໃຊ້ເວລາຫວ່າງໃນການເຮັດການວິໄຈເພາະເປັນວຽກງານທີ່ຖີ່ຖ້ວນຮອບຄອບສຳລັບຄູທີ່ມີສະມັດຖະພາບພື້ນຖານທາງດ້ານການວິໄຈຈະຊ່ວຍໃຫ້ມີຄວາມຮູ້ ແລະ ທັດສະນະຄະຕິທີ່ດີຕໍ່ການວິໄຈຈະເປັນການເອື້ອອຳນວຍໃຫ້ຄວາມຮ່ວມມືໃນການວິໄຈ ແລະ ພັດທະນາຫຼັກສູດ ຫຼື ນຳຄວາມຮູ້ທາງການວິໄຈໄປໃຊ້ໃນການວິເຄາະບັນຫາເຕັກນິກວິທີການສອນໃນການນຳການວິໄຈເຂົ້າໄປຊ່ວຍໃນການຮຽນ-ການສອນ ແລະ ນຳພາຜູ້ຮຽນສູ່ຄວາມສຳເລັດຕາມເປົ້າໝາຍທີ່ວາງໄວ້ຂອງຫຼັກສູດໄດ້ນັ້ນ. ຄູຜູ້ນຳໃຊ້ຫຼັກສູດຕ້ອງສາມາດວິໄຈໄດ້ ແລະ ນຳການວິໄຈໄປໃຊ້ປະໂຫຍດໄດ້ທັນເວລາ ແລະ ຖືກຕ້ອງກັບສະພາບບັນຫາຄວາມເປັນຈິງ. ສິ່ງທີ່ສຳຄັນ, ທຸກໆໜ່ວຍງານທາງການສຶກສາຈຳເປັນຕ້ອງສ້າງບັນຍາກາດທີ່ເອື້ອອຳນວຍຕໍ່ການວິໄຈທາງການສຶກສາ ເຊັ່ນ ການວິໄຈໃຫ້ມີຂໍ້ມູນພື້ນຖານທີ່ດີ ແລະ ພ້ອມຈະນຳໃຊ້ຂໍ້ມູນນັ້ນມາໃຊ້ໄດ້, ມີເອກະສານກ່ຽວກັບຄວາມຄິດ. ຫຼັກການ, ແລະ ທິດສະດີທີ່ກ່ຽວຂ້ອງພຽງພໍສຳລັບການວິໄຈແຕ່ລະເລື່ອງ. ສາຍເຫດສຳຄັນທີ່ຕ້ອງມີການໃຊ້ການວິໄຈນຳໜ້າການຮຽນ-ການສອນເປັນເພາະມີບັນຫາກ່ຽວກັບການສອນຂອງຄູ. ຄູສ່ວນໃຫຍ່ບໍ່ສາມາດເຊື່ອມ

ໂຍງທິດສະດີ ແລະ ຫຼັກການທີ່ໄດ້ຮຽນມາໄປສູ່ການປະຕິບັດໄດ້. ຄູຈິ່ງສອນດ້ວຍການເນັ້ນເນື້ອເປັນສຳຄັນ. ເພື່ອຫຼີກເວັ້ນການສອນທີ່ເນັ້ນເນື້ອໃນແບບທ່ອງຈຳນີ້, ຈະເຮັດແນວໃດເພື່ອເຮັດໃຫ້ໂຮງຮຽນ ຫຼື ສະຖາບັນການສຶກສາເຫັນຄວາມສຳຄັນຂອງການວິໄຈ ແລະ ສົ່ງເສີມໃຫ້ຄູເຮັດການວິໄຈຄວບຄູ່ກັບການສອນເພື່ອນຳຂໍ້ຄົ້ນພົບຈາກຜົນການວິໄຈໄປໃຊ້ໃນການປັບປຸງຄຸນນະພາບການຮຽນ-ການສອນຂອຕົນເອງ ຫຼື ແກ້ບັນຫາການຮຽນ-ການສອນຂອງຄູທີ່ປະສົບຢູ່ນັ້ນໃຫ້ດີຂຶ້ນ (ບັນຊາ ອຶ້ງສະກຸລ. ພ.ສ. ໜ້າທີ 24-31).

ນອກຈາກນີ້, ການວິໄຈຍັງເປັນເຄື່ອງມືພື້ນຖານທີ່ສຳຄັນຢ່າງໜຶ່ງໃນການສ້າງອົງຄວາມຮູ້ ແລະ ພັດທະນາເຕັກໂນໂລຍີໃໝ່ໆ ເພື່ອການພັດທະນາການສຶກສາ, ເສດຖະກິດ, ສັງຄົມ, ການເມືອງ ແລະ ຄວາມໝັ້ນຄົງຂອງຊາດ. ລວມທັງເປັນຂະບວນການ ແລະ ເຕັກນິກທີ່ຊ່ວຍແກ້ໄຂບັນຫາຂອງມະນຸດ ໂດຍການສຶກສາວິທະຍາການຄວາມກ້າວໜ້າໃນດ້ານຕ່າງໆ ຢ່າງຕໍ່ເນື່ອງ ເພື່ອປັບປຸງຄຸນນະພາບ ແລະ ມາດຖານຂອງການປະຕິບັດງານໃຫ້ເກີດຜົນຜະລິດ, ຜົນລັບ, ແລະ ຜົນກະທົບທີ່ເປັນປະໂຫຍດຕໍ່ການດຳລົງຊີວິດຢ່າງແທ້ຈິງ (ກະຊວງສຶກສາທິການ ແລະ ກິລາ. 2001.ໜ້າທີ 1-3).

## 1.2 ສະພາບປັດຈຸບັນຂອງບັນຫາ

ກະຊວງສຶກສາທິການ ແລະ ກິລາ (2002. ໜ້າທີ 36) ໄດ້ລະບຸເອົາການວິໄຈເຂົ້າໄວ້ໃນກົດໝາຍການສຶກສາ ຄ.ສ. 2005 ສະບັບ 2015 ສະບັບປັບປຸງ ວ່າ ຄູໃນທຸກສະຖາບັນການສຶກສາ ທັງລະດັບສາມັນ, ວິຊາຊີບ, ວິທະຍາໄລຄູ ແລະ ລະດັບມະຫາວິທະຍາໄລ ຕ້ອງມີໜ້າທີ່ເຮັດການວິໄຈ ເພາະການວິໄຈເປັນການສ້າງຄວາມຮູ້ຢ່າງຕໍ່ເນື່ອງຂອງການສຶກສາ ແລະ ການວິໄຈມີຄວາມຈຳເປັນຢ່າງຍິ່ງຕໍ່ການພັດທະນາປະເທດໃນທຸກໆ ດ້ານ ແລະ ຍັງລະບຸປະໂຫຍດໄວ້ຢ່າງຊັດເຈນກ່ຽວກັບການວິໄຈໄວ້ 10 ປະການ ດັ່ງນີ້: (1) ການວິໄຈຊ່ວຍໃຫ້ເກີດວິທະຍາການໃໝ່ໆ ເພີ່ມພູນຍິ່ງຂຶ້ນທັງດ້ານທິດສະດີ ແລະ ພາກປະຕິບັດ, (2) ການວິໄຈສາມາດແກ້ບັນຫາໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ຢ່າງຖືກຕ້ອງ ແລະ ຍຸຕິທຳ, (3) ການວິໄຈຊ່ວຍໃຫ້ເຂົ້າໃຈປາກົດການ ແລະ ພຶດຕິກາຕ່າງໆ ໄດ້ດີຂຶ້ນ ແລະ ສາມາດໃຊ້ທຳນາຍປາກົດການ ແລະ ພຶດຕິກຳຕ່າງໆ ໄດ້ດີຂຶ້ນ ແລະ ສາມາດໃຊ້ທຳນາຍປາກົດການ ແລະ ພຶດຕິກຳໄດ້ຢ່າງຖືກຕ້ອງ ແລະ ມີປະສິດທິພາບຫຼາຍກວ່າການຄາດຄະເນແບບສາມັນສຳນຶກ, (4) ການວິໄຈສາມາດຊ່ວຍໃຫ້ການກຳນົດໃນດ້ານນະໂຍບາຍການວາງແຜນ. ການຕັດສິນບັນຫາ ຫຼື ການວິນິດໄສສັ່ງການຂອງຜູ້ບໍລິຫານໃຫ້ເປັນໄດ້ຢ່າງຖືກຕ້ອງ ແລະ ວ່ອງໄວ, (5) ການວິໄຈສາມາດຕອບຄຳຖາມທີ່ຍັງຄຸມເຄືອໃຫ້ກະຈ່າງແຈ້ງຍິ່ງຂຶ້ນ, (6) ການວິໄຈຊ່ວຍກະຕຸ້ນຄວາມສົນໃຈຂອງນັກວິຊາການໃຫ້ມີການໃຊ້ຜົນການວິໄຈ ແລະ ທຳການຄົ້ນຄວ້າການວິໄຈຕໍ່ໄປ, (7) ການວິໄຈຈະເຮັດໃຫ້ຊາບຂໍ້ເທັດຈິງຕ່າງໆ ເຊິ່ງນຳມາໃຊ້ເປັນປະໂຫຍດເພື່ອການປັບປຸງ ຫຼື ພັດທະນາບຸກຄະລາກອນ ແລະ ໜ່ວຍງານຕ່າງໆໃຫ້ມີຄວາມຈະເລີນກ້າວໜ້າດີຍິ່ງຂຶ້ນ, (8) ການວິໄຈເຮັດໃຫ້ມີຜົນງານການວິໄຈເພີ່ມຂຶ້ນ ເຊິ່ງຈະຊ່ວຍສົ່ງເສີມໃຫ້ຮູ້ຂໍ້ເທັດຈິງຢ່າງກວ້າງຂວາງ ແລະ ຊັດເຈນຫຼາຍຂຶ້ນ, (9) ການວິໄຈຊ່ວຍກະຕຸ້ນບຸກຄົນໃຫ້ມີເຫດຜົນ ຮູ້ຈັກຄິດ ແລະ ຄົ້ນຄວ້າຫາຄວາມຮູ້ຢູ່ສະເໝີ, ແລະ (10) ການວິໄຈຊ່ວຍໃຫ້ມີເຄື່ອງມື ແລະ ເຕັກໂນໂລຍີໃໝ່ໆ ທີ່ທັນສະໄໝເກີດຂຶ້ນຢູ່ຕະລອດເວລາເຊິ່ງອຳນວຍຄວາມສະດວກສະບາຍໃຫ້ແກ່ມະນຸດ.

ແຜນງານການສຶກາແຫ່ງຊາດ ຄ.ສ. 2015 (ກະຊວງສຶກສາທິການ ແລະ ກິລາ. ກົມສ້າງຄູ. 2015. ໜ້າທີ. 89) ໄດ້ກຳນົດມາດຖານຄູໄວ້ 4 ຂໍ້ ໃນດ້ານການເຮັດການວິໄຈວ່າ ຄູທຸກຄົນຕ້ອງມີ (1) ຄວາມຮູ້ຄວາມເຂົ້າໃຈກ່ຽວກັບຄວາມໝາຍຄວາມສຳຄັນຂອງການວິໄຈວ່າມີສ່ວນສຳຄັນຕໍ່ການປັບປຸງຄຸນນະພາບການຮຽນ-ການສອນຂອງຕົນເອງ, (2) ຕ້ອງສາມາດໃຊ້ຄວາມຮູ້ກ່ຽວກັບການວິໄຈໃນການປັບປຸງການຮຽນ-ການສອນຂອງຕົນ, (3) ສາມາດປະຕິບັດການວິໄຈ ແລະ ສະໜັບສະໜູນການວິໄຈຂອງເພື່ອນຄູດ້ວຍກັນ ຫຼື ພະນັກງານຄູໃໝ່ເພື່ອໃຫ້ສາມາດບັນລຸຜົນ ສຳເລັດທາງດ້ານການ

ຮຽນ-ການສອນໄດ້ຢ່າງມີປະສິດທິພາບ, (4) ສາມາດໃຫ້ຄໍາປຶກສາຫາລືແນະນໍາຄູກ່ຽວກັບການເຮັດການວິໄຈໄດ້ຢ່າງຊັດເຈນ ແລະ ເລິກເຊິ່ງ ເພື່ອໃຫ້ຄູໃໝ່ມີທັງຄວາມຮູ້ ແລະ ຄວາມສາມາດໃນການນໍາງານວິໄຈມາພັດທະນານະວັດຕະກໍາ ຫຼື ສື່ການຮຽນ-ການສອນໃໝ່ໆ ເພື່ອຄຸນນະພາບຂອງຜູ້ຮຽນ.

**1.3 ສະພາບທີ່ເປັນບັນຫາ**

ການດໍາເນີນງານໃນຫຼາຍປີທີ່ຜ່ານມາຂອງວິທະຍາໄລຄູສະຫວັນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຊິ່ງຖືວ່າເປັນສະຖາບັນທີ່ມີຄວາມເກົ່າແກ່ ແລະ ມີຊື່ສຽງໃນສະຖານບັນສ້າງຄູທົ່ວປະເທດມາຫຼາຍທົດສະຕະວັດ. ແຕ່ເຖິງຢ່າງໃດກໍ່ດີ, ບົດລາຍງານປະຈໍາປີວິທະຍາໄລຄູສະຫວັນນະເຂດ ສົກ 2018-2019 ພົບວ່າ ຄູສອນກວ່າ 70% ທີ່ສອນໃນວິທະຍາໄລຄູສະຫວັນນະເຂດ ເຮັດການວິໄຈຂ້ອນຂ້າງໜ້ອຍ, ບໍ່ມີການນໍາເຕັກນິກວິທີການສອນ ແລະ ສື່ສານສອນໃໝ່ໆ ມາໃຊ້ໃນການແກ້ບັນຫາ ແລະ ພັດທະນາການຮຽນ-ການສອນຂອງຕົນ. ການສອນສ່ວນໃຫຍ່ເນັ້ນການສອນເນື້ອໃນ ເພື່ອຕ້ອງການໃຫ້ຈົບຕາມຫຼັກສູດຕາມເວລາທີ່ກໍານົດ ຫຼື ພາກຮຽນແຕ່ລະປີທີ່ຕົນກໍານົດໄວ້ເທົ່ານັ້ນ. ການຮຽນການສອນແມ່ນຂາດການຄົ້ນຄິດ ແລະ ພັດທະນານະວັດຕະກໍາໃຫ້ເປັນຮູບແບບຂອງຕົນເອງເຊິ່ງສາຍເຫດອາດມາຈາກຫຼາຍບັນຫາ. ແຕ່ໃນນັ້ນ, ການວິໄຈເປັນສິ່ງທີ່ຄູເບິ່ງເປັນເລື່ອງຍາກ, ບໍ່ສາມາດເຮັດໄດ້, ຄູຂາດຄວາມຮູ້ຄວາມເຂົ້າໃຈເລື່ອງການວິໄຈ, ຄູສ່ວນຫຼາຍບໍ່ເຄີຍເຮັດການວິໄຈ, ບໍ່ມີເວລາເຮັດການວິໄຈ ຫຼື ອາດບໍ່ໄດ້ຮັບການສະໜັບສະໜຸນຈາກຜູ້ບໍລິຫານ ເປັນຕົ້ນ. ຜົນທີ່ຕາມມາຄື ຄຸນນະພາບການຈັດການຮຽນ-ການສອນຂອງວິທະຍາໄລຄູສະຫວັນນະເຂດ ນັກສຶກສາຂາດຂະບວນການທໍາງານເປັນທີມ, ຂາດຄວາມຄິດລິເລີ່ມສ້າງສັນ, ຜົນການຮຽນບໍ່ໜ້າເພິ່ງພໍໃຈ ຫຼື ຕໍ່າກວ່າເກນມາດຖານຂອງຫຼັກສູດແຫ່ງຊາດກໍານົດໄວ້ (ວິທະຍາໄລຄູສະຫວັນນະເຂດ. 2018).

**1.4 ສະພາບທີ່ຕ້ອງການພັດທະນາ**

ສະພາບ ແລະ ບັນຫາດັ່ງກ່າວ ໃນຖານະທີ່ຜູ້ວິໄຈເປັນຜູ້ມີບົດບາດ ແລະ ມີສ່ວນກ່ຽວຂ້ອງກັບການພັດທະນາຄູວິທະຍາໄລຄູສະຫວັນນະເຂດ ຈຶ່ງເຫັນໄດ້ເຖິງຄວາມສໍາຄັນຂອງການວິໄຈພາກປະຕິບັດຂອງຄູ ອັນຈະນໍາມາໃຊ້ແກ້ໄຂບັນຫາ ແລະ ພັດທະນາການຈັດກິດຈະກໍາການຮຽນ-ການສອນຂອງຄູຜູ້ສອນໃຫ້ເປັນໄປຕາມຄວາມຕ້ອງການຂອງຜູ້ຮຽນ, ຜູ້ປົກຄອງ, ຊຸມຊົນ ແລະ ໂຮງຮຽນສາມັນຜູ້ທີ່ນໍາໃຊ້ຜົນຜະລິດການສ້າງຄູນີ້ ຈຶ່ງມີຄວາມສົນໃຈທີ່ຈະພັດທະນາສັກກະຍະພາບການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ໂດຍນໍາຫຼັກການຂອງການວິໄຈພາກປະຕິບັດເພື່ອເປັນແນວທາງໃນການພັດທະນາເພື່ອທີ່ຈະໄດ້ນໍາຜົນຂອງການວິໄຈມາໃຊ້ປັບປຸງ. ແກ້ໄຂ, ແລະ ພັດທະນາຄຸນນະພາບການຮຽນ-ການສອນຂອງຄູວິທະຍາໄລຄູໃຫ້ມີປະສິດທິພາບ ແລະ ເກີດປະສິດທິຜົນຕໍ່ນັກສຶກສາ ແລະ ເພື່ອໃຫ້ບັນລຸຕາມເປົ້າໝາຍຂອງການຈັດການຮຽນການສອນຕໍ່ໄປ.

**2. ຄໍາຖາມການວິໄຈ**

ການວິໄຈຄັ້ງນີ້ມີຈຸດມຸ້ງໝາຍເພື່ອຕອບຄໍາຖາມຫຼັກ ຄື ຜົນການພັດທະນາຄູໂດຍໃຊ້ຮູບແບບການຝຶກອົບຮົມໃຫ້ຄວາມຮູ້ຄວາມເຂົ້າໃຈ ແລະ ທັກສະເລື່ອງການວິໄຈພາກປະຕິບັດ ໂດຍນໍາໃຊ້ຄູ່ມືການວິໄຈພາກປະຕິບັດທີ່ພັດທະນາໂດຍ ອຈ ກະຕິກາ ຣາຊະບຸຕຣ໌ ຈະເປັນແນວໃດ ຈໍາແນກຕາມຕົວປ່ຽນທີ່ກ່ຽວຂ້ອງດັ່ງຕໍ່ໄປນີ້:

(1) ສະພາບການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດເປັນແນວ ໃດກ່ອນການຝຶກອົບຮົມ?

(2) ສະມັດຖະນະການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດກ່ອນຫຼັງການຝຶກອົບຮົມ ຢູ່ໃນລະດັບໃດ?

(3) ຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດຜູ້ເຂົ້າຮັບການຝຶກອົບຮົມເລື່ອງການວິໄຈພາກປະ ຕິບັດຕໍ່ຮູບແບບການຝຶກອົບຮົມ ຢູ່ໃນລະດັບໃດ ແລະ ເປັນແນວໃດ?

## 3. ວັດຖຸປະສົງການວິໄຈ

ວັດຖຸປະສົງຂອງການວິໄຈຄັ້ງນີ້ປະກອບມີ 3 ວັດຖຸປະສົງ ດັ່ງນີ້:

1) ເພື່ອສຶກສາສະພາບປັດຈຸບັນ, ສະພາບບັນຫາ, ແລະ ສະພາບຄວາມຕ້ອງການໃນການພັດທະນາດ້ານການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດເປັນແນວໃດກ່ອນການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງການຮຽນ

2) ເພື່ອສຶກສາສະມັດຖະນະການຮັບຮູ້ເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດຫຼັງການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ

3) ເພື່ອສຶກສາຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດຫຼັງການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ.

## 4. ວິທີການເກັບລວບລວມຂໍ້ມູນ

### 4.1 ແບບແຜນການວິໄຈ

ແບບແຜນການວິໄຈຄັ້ງນີ້ແມ່ນ ການວິໄຈພາກປະຕິບັດແບບມີສ່ວນຮ່ວມ ກ່າວຄື ມີການສໍາຫຼວດສະພາບປັດຈຸບັນກ່ຽວກັບການເຮັດການວິໄຈຂອງຄູວິທະຍາໄລຄູ, ສະພາບທີ່ເປັນບັນຫາ, ສະພາບທີ່ຕ້ອງການພັດທະນາໃນເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ. ຈາກນັ້ນ, ໄດ້ມີການຈັດໂຄງການຝຶກອົບຮົມໃຫ້ຄວາມຮູ້ຄວາມເຂົ້າໃຈໃຫ້ແກ່ຄູ. ມີການທົດສອບກ່ອນ ແລະ ຫຼັງການຝຶກອົບຮົມເພື່ອສຶກສາຄວາມຮູ້ຄວາມເຂົ້າໃຈເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ. ຈາກນັ້ນ, ສຶກສາຄວາມເພິ່ງພໍໃຈຫຼັງການຝຶກອົບຮົມຂອງຄູຜູ້ເຂົ້າຮັບການຝຶກອົບຮົມໃນຄັ້ງນັ້ນ.

### 4.2 ປະຊາກອນ/ກຸ່ມຕົວຢ່າງ

ກຸ່ມປະຊາກອນທີ່ໃຫ້ເຂົ້າຮັບການຝຶກອົບຮົມແມ່ນຄູຜູ້ສົນໃຈທັງໝົດວິທະຍາໄລຄູສະຫວັນນະເຂດ ໂດຍການອາສາສະມັກ. ກຸ່ມຕົວຢ່າງທີ່ຕ້ອງການສຶກສາແມ່ນກຸ່ມຄູສອນໃໝ່ທີ່ມີປະສົບການສອນບໍ່ເກີດ 5 ປີ ຈານວນທັງໝົດ 52 ຄົນ.

### 4.3 ເຄື່ອງທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບມີ ດັ່ງນີ້:

(1) ແບບສໍາຫຼວດສະພາບປັດຈຸບັນ, ສະພາບບັນຫາ, ແລະ ສະພາບຄວາມຕ້ອງການດ້ານການພັດທະນາ

(2) ຄູ່ມືການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ

(3) ບົດທົດສອບກ່ອນ ແລະ ຫຼັງການຝຶກອົບຮົມເລື່ອງການວິໄຈໃນຫ້ອງຮຽນ.

(4) ແບບສໍາຫຼວດຄວາມເພິ່ງພໍໃຈຫຼັງການຝຶກອົບຮົມ

### 4.4 ການເກັບລວບລວມຂໍ້ມູນ

ການເກັບລວບລວມຂໍ້ມູນການວິໄຈຄັ້ງນີ້ແມ່ນເກັບຈາກ ແບບສໍາຫຼວດສະພາບປັດຈຸບັນ, ສະພາບບັນຫາ, ແລະ ສະພາບຄວາມຕ້ອງການຈໍານວນ 153 ຄົນ, ແບບສາພາດຜູ້ບໍລິຫານວິທະຍາໄລຄູຈານວນ 4 ທ່ານ, ແບບສາພາດຄູຝຶກຫຼັກວິທະຍາໄລຄູຈໍານວນ 7 ຄົນ. ເກັບຈາກບົດທົດສອບກ່ອນແລະຫຼັງຈານວນ 52 ຄົນ. ເກັບຈາກແບບສອບຖາມຄວາມເພິ່ງພໍໃຈຫຼັງການຝຶກອົບຮົມຈໍານວນ 52 ຊຸດ.

**4.5 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

ສະຖິຕິທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍ ແບບສຳຫຼວດສະພາບບັນຫາປະກອບດ້ວຍສະຖິຕິຄື ຄ່າສະ ເລ່ຍ ແລະ ຄ່າສ່ວນຜັນປ່ຽນມາດຖານ. ການວິເຄາະເນື້ອຫາ ຫຼື ອີງປະກອບຈາກແບບສຳພາດຜູ້ບໍລິຫາ ແລະ ຄູຝຶກ ວິທະຍາໄລຄູ. ສະຖິຕິທີ່ໃຊ້ຄ່າສະເລ່ຍ, ອັດຕາສ່ວນຮ້ອຍ ແລະ ສ່ວນຜັນປ່ຽນມາດຖານຈາກແບບທົດສອບກ່ອນແລະ ຫຼັງການຝຶກອົບຮົມ. ແລະສະຖິຕິທີ່ເປັນຄ່າສະເລ່ຍ ແລະ ສ່ວນຜັນປ່ຽນມາດຖານຈາກແບບສອບຖາມຄວາມເພິ່ງພໍໃຈ ຫຼັງການຝຶກອົບຮົມ.

**5. ຜົນການວິເຄາະຂໍ້ມູນ**

5.1 ຜົນການສຳຫຼວດສະພາບປັດຈຸບັນ, ສະພາບບັນຫາ, ແລະ ຄວາມຕ້ອງການໃນການພັດທະນາເລື່ອງການ ວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ

ສະພາບປັດຈຸບັນຂອງການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ.ລາວ ສາມາດແບ່ງອອກເປັນສາມດ້ານ: ຄວາມຮູ້ຂອງຄູດ້ານການວິໄຈພາກປະຕິບັດ, ຂະບວນການສົ່ງເສີມຄູໃນການເຮັດການ ວິໄຈພາກປະຕິບັດ ແລະ ການໃຫ້ຄວາມສຳຄັນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ ແລະ ຫຼັກ ສູດການວິໄຈ ພາກປະຕິບັດໃນຫ້ອງຮຽນ.

**ຕາຕະລາງທີ 5.1.1 ຄວາມຮູ້ຂອງຄູດ້ານການວິໄຈພາກປະຕິບັດ, ຂະບວນການສົ່ງເສີມຄູໃນການເຮັດການວິໄຈພາກ ປະຕິບັດ ແລະ ການໃຫ້ຄວາມສຳຄັນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ ແລະ ຫຼັກສູດການວິໄຈ ພາກປະຕິບັດໃນຫ້ອງຮຽນ (n = 153)**

| ອົງປະກອບການສຳຫຼວດ<br>ຄວາມຮູ້ຂອງຄູດ້ານການວິໄຈພາກປະຕິບັດ | $\bar{x}$ | S.D. | ຄວາມໝາຍ |
|---|---|---|---|
| 1. ການກຳນົດບັນຫາ | 3.78 | 0.78 | ຍາກຫຼາຍ |
| 2. ການຕັ້ງຫົວຂໍ້ | 3.80 | 0.78 | ຍາກຫຼາຍ |
| 3. ການຕັ້ງວັດຖຸສົງການວິໄຈ | 3.78 | 0.76 | ຍາກຫຼາຍ |
| 4. ການຕັ້ງສົມມຸດຕິຖານການວິໄຈ | 3.75 | 0.74 | ຍາກຫຼາຍ |
| 5. ການສ້າງຂອບເຂດການວິໄຈ | 3.74 | 0.74 | ຍາກຫຼາຍ |
| 6. ການນິຍາມສັບສະເພາະ | 3.69 | 0.81 | ຍາກຫຼາຍ |
| 7. ການທົບທວນເອກະສານ | 3.92 | 0.87 | ຍາກຫຼາຍ |
| 8. ການສ້າງເຄື່ອງມືການວິໄຈ | 3.88 | 0.90 | ຍາກຫຼາຍ |
| 9. ການເກັບກຳຂໍ້ມູນ | 3.91 | 0.93 | ຍາກຫຼາຍ |
| 10. ການໃຊ້ສະຖິຕິເພື່ອການວິເຄາະ | 4.01 | 0.89 | ຍາກຫຼາຍ |
| 11. ການຂຽນຜົນການວິໄຈ | 3.99 | 0.86 | ຍາກຫຼາຍ |
| 12. ການຂຽນອະພິປາຍຜົນ | 3.99 | 0.83 | ຍາກຫຼາຍ |
| 13. ການຂຽນລາຍງານການວິໄຈ | 3.73 | 0.73 | ຍາກຫຼາຍ |
| 14. ການຂຽນເອກະສານອ້າງອີງ | 3.69 | 0.84 | ຍາກຫຼາຍ |
| ສະເລ່ຍລວມ | 3.83 | 0.82 | ຍາກຫຼາຍ |

ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງທີ 5.1.1, ຄວາມຮູ້ຂອງຄູດ້ານການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູ ວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍພາບລວມພົບວ່າ "ຢູ່ໃນລະດັບຍາກຫຼາຍ" ($\bar{X}$ = 3.83, S.D. = 0.82 ). ເມື່ອພິຈາລະນາລາຍຂໍ້ ພົບວ່າ ຄ່າສະເລ່ຍທີ່ມີຄະແນນສູງສຸດແມ່ນຂໍ້ທີ 10 "ການໃຊ້ສະຖິຕິເພື່ອການວິເຄາະ"

($\bar{x} = 4.01, S.D. = 0.89$) , ຂໍ້ທີ 12 "ການຂຽນອະທິບາຍຜົນ" ($\bar{X}$ = 3.99, S.D. = 0.83), ແລະ ຂໍ້ທີ 11 "ການຂຽນຜົນການວິໄຈ" ($\bar{X}$ = 3.70, S.D. = 0.89) ຕາມລາດັບ. ໃນທາງກົງກັນຂ້າມ, ຄ່າສະເລ່ຍທີ່ມີຄະແນນຕ່າທີ່ສຸດໄດ້ແກ່ ຂໍ້ທີ 14 "ການຂຽນເອກະສານອ້າງ" ($\bar{X}$ = 3.69, S.D. = 0.84), ແລະ ຂໍ້ທີ 6 "ການນິຍາມສັບສະເພາະ" ($\bar{X}$ = 3.69, S.D. = 0.81).

**ຕາຕະລາງທີ 5.1.2 ການສົ່ງເສີມຂະບວນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະ ຫວັນນະເຂດ ສປປ.ລາວ (n = 153)**

5.2 ສະມັດຖະນະການຮັບຮູ້ເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ

| ອົງປະກອບການສຳຫຼວດ<br>**ການສົ່ງເສີມຂະບວນການເຮັດການວິໄຈພາກປະຕິບັດ** | x̄ | S.D. | ຄວາມໝາຍ |
|---|---|---|---|
| 1. ວຄສ ມີນະໂຍບາຍຂອງວິທະຍາໄລຄູຕໍ່ການວິໄຈພາກປະຕິບັດ | 3.73 | 0.92 | ຍາກຫຼາຍ |
| 2. ວຄສ ມີການກຳນົດໜ່ວຍງານດ້ານການວິໄຈພາກປະຕິບັດ | 3.69 | 0.87 | ຍາກຫຼາຍ |
| 3. ວຄສ ກຳນົດບຸກຄະລາກອນໃນດ້ານການວິໄຈພາກປະຕິບັດ | 3.64 | 0.81 | ຍາກຫຼາຍ |
| 4. ວຄສ ສະໜັບສະໜູນການເຮັດການວິໄຈພາກປະຕິບັດ | 3.80 | 1.02 | ຍາກຫຼາຍ |
| 5. ວຄສ ມີເວທີໃຫ້ມີການເຜີຍແຜ່ການວິໄຈພາກປະຕິບັດ | 3.85 | 0.98 | ຍາກຫຼາຍ |
| 6. ວຄສ ຈັດສັນງົບປະມານໃຫ້ຄູດ້ານການວິໄຈພາກປະຕິບັດ | 4.00 | 0.92 | ຍາກຫຼາຍ |
| ສະເລ່ຍລວມ | **3.79** | **0.92** | ຍາກຫຼາຍ |

ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງທີ 5.1.2, ຜົນການສາຫຼວດພົບວ່າ ການສົ່ງເສີມຂະບວນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍພາບລວມຢູ່ໃນລະດັບ "ຍາກຫຼາຍ" ($\bar{X}$ = 3.79, S.D. = 0.92). ເມື່ອພິຈາລະນາລາຍຂໍ້ ພົບວ່າ ຄ່າສະເລ່ຍທີ່ມີຄະແນນສູງສຸດໄດ້ແກ່ ຂໍ້ທີ 6 "ວຄສ ຈັດສັນງົບປະມານໃຫ້ການວິໄຈພາກປະຕິບັດໃນຫ້ອງຮຽນ" ($\bar{X}$ = 4.00, S.D. = 0.92) ຂະນະທີ່ຄ່າສະເລ່ຍທີ່ມີຄະແນນຕໍ່າສຸດໄດ້ແກ່ ຂໍ້ທີ 3 "ວຄສ ຈັດສັນບຸກຄະລາກອນໃນການວິໄຈພາກປະຕິບັດໃນຫ້ອງຮຽນ" ($\bar{X}$ = 3.64, S.D. = 0.81).

**ຕາຕະລາງທີ 5.1.3 ການໃຫ້ຄວາມສຳຄັນດ້ານການວິໄຈພາກປະຕິບັດໃນຫ້ອງຮຽນ ແລະ ຫຼັກສູດວິໄຈພາກປະຕິບັດໃນຫອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ (n = 153)**

| ອົງປະກອບການສຳຫຼວດ<br>**ການໃຫ້ຄວາມສຳຄັນດ້ານການວິໄຈພາກປະຕິບັດໃນຫ້ອງຮຽນ ແລະ ຫຼັກສູດວິໄຈ** | x̄ | S.D. | ຄວາມໝາຍ |
|---|---|---|---|
| 1. ວຄສ ໃຫ້ຄວາມສຳຄັນດ້ານການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ | 4.05 | 0.98 | ຍາກຫຼາຍ |
| 2. ຫຼັກສູດການວິໄຈພາກປະຕິບັດມີປະສິດທິພາບ ແລະ ປະສິດທິຜົນ | 3.97 | 0.90 | ຍາກຫຼາຍ |
| 3. ເນື້ອໃນຂອງການວິໄຈພາກປະຕິບັດມີຄວາມຄົບຖ້ວນສົມບູນ | 3.88 | 0.83 | ຍາກຫຼາຍ |
| 4. ມີການຝຶກອົບຮົມໃຫ້ຄວາມຮູ້ກ່ຽວກັບເນື້ອຫາຫຼັກສູດ | 3.80 | 0.94 | ຍາກຫຼາຍ |
| 5. ມີການເຮັດການວິໄຈພາກປະຕິບັດສຳເລັດສົມບູນ | 3.75 | 0.87 | ຍາກຫຼາຍ |
| ຄະແນນສະເລ່ຍລວມ | **3.89** | **0.90** | ຍາກຫຼາຍ |

ດັ່ງສະແດງໃຫ້ເຫັນໃນຕາຕາລາງທີ 5.1.3, ຜົນການສຳຫຼວດຊີ້ໃຫ້ເຫັນວ່າ ການໃຫ້ຄວາມສຳຄັນຂອງວິທະຍາໄລຄູດ້ານການສົ່ງເສີມການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ

ສປປ. ລາວ ພົບວ່າ ໂດຍລວມ ຢູ່ໃນລະດັບພົບ "ບັນຫາໃນລະດັບຫຼາຍ" ($\bar{X}$ = 3.89, S.D. = 0.92). ເມື່ອພິຈາລະນາລາຍຂໍ້ ພົບວ່າ ຄ່າສະເລ່ຍທີ່ມີຄະແນນສູງສຸດແມ່ນຂໍ້ທີ 1 "ວິທະຍາໄລຄູໃຫ້ຄວາມສໍາຄັນການວິໄຈພາກປະຕິບັດໃນລະດັບມີບັນຫາຫຼາຍທີ່ສຸດ" ($\bar{X}$ = 4.05, S.D. = 0.98) ຂະນະທີ່ຄ່າສະເລ່ຍທີ່ມີຄະແນນໜ້ອຍທີ່ສຸດໄດ້ແກ່ ຂໍ້ທີ 5 ການເຮັດການວິໄຈພາກປະຕິບັດໃຫ້ສໍາເລັດ ($\bar{X}$ = 3.75, S.D. = 0.87).

ສະຫຼຸບລວມແລ້ວ, ຜົນການສໍາຫຼວດສະແດງໃຫ້ເຫັນວ່າມີ 3 ປັດໃຈທີ່ສົ່ງຜົນຕໍ່ຄວາມສາມາດຂອງຄູວິທະຍາ ໄລຄູສະຫວັນນະເຂດໃນການເຮັການວິໄຈພາກປະຕິບັດໃນຫ້ອງຮຽນ. ປັດໄຈທີໜຶ່ງ, ສະຖິຕິການວິເຄາະ, ການຂຽນຜົນການວິໄຈ ແລະ ການຂຽນການອະພິປາຍ, ການເກັບກໍາຂໍ້ມູນຄືປັດໄຈທີ່ມີອິດທິພົນຕໍ່ຄວາມຮູ້ຂອງຮູ້ດ້ານການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ. ປັດໄຈທີສອງ ຄື ດ້ານງົບປະມານ, ເວທີໃນການລາຍງານການວິໄຈ, ການສົ່ງເສີມຈາກຝ່າຍບໍລິຫານ, ແລະ ນະໂຍບາຍຄືປັດໄຈທີ່ກ່ຽວຂ້ອງກັບການສົ່ງເສີມຂະບວນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູ ວຄສ. ປັດໄຈທີ່ສາມ ຄື ການໃຫ້ຄວາມສໍາຄັນຂອງວິທະຍາໄລຄູ, ຫຼັກສູດ, ເນື້ອຫາຫຼັກສູດ, ແລະ ການຝຶກອົບຮົມ ຄື ປັດໄຈທີ່ສົ່ງຜົນຕໍ່ການສົ່ງເສີມການເຮັດການວິໄຈພາກປະຕິບັດຂອງຄູ ວຄສ.

5.1.4 ຜົນການສຶກສາຊ່ອງທາງໃນການແກ້ໄຂບັນຫາເລື່ອງການສົ່ງເສີມການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ຄະນະບໍລິຫານ ແລະ ຄູຝຶກຫຼັກແຫຼ່ງໄດ້ໃຫ້ທັດສະນະພາຍໃຕ້

3 ຄໍາຖາມ ດັ່ງນີ້:

(1) ສະພາບປັດຈຸບັນໃນການຮຽນ-ການສອນໃນວິທະຍາໄລຄູສະຫວັນນະເຂດເປັນແນວໃດ?

**ຝ່າຍບໍລິຫານວິທະຍາໄລຄູສະຫວັນນະເຂດ** ກ່າວວ່າການຮຽນ-ການສອນ ແລະ ການເຮັດການວິໄຈໃນວິທະຍາໄລຄູສະຫວັນນະເຂດເປັນພຽງຈຸດເລີ່ມຕົ້ນລະຫວ່າງຄູ ແລະ ນັກສຶກສາເທົ່ານັ້ນ. ເຖິງຢ່າງໃດກໍ່ດີ, ການເຮັດການວິໄຈຂອງຄູຍັງບໍ່ທັນເປັນຫົວໃຈຂອງຂະບວນການວິໄຈທີ່ແທ້ຈິງພາຍໃຕ້ວິໄສທັດຂອງວິທະຍາໄລຄູ.

**ຄູຝຶກຫຼັກແຫຼ່ງ** ກ່າວວ່າ ການຮຽນ-ການສອນໃນວິທະຍາໄລຄູຍັງເປັນການສອນທີ່ເປັນໄປແບບບັນລະຍາຍ ແລະມອບໝາຍວຽກບ້ານໃຫ້ເຮັດເພື່ອລາຍງານໂດຍບໍ່ມີການສັງເຄາະອົງປະກອບປະເດັນສໍາຄັນກ່ຽວກັບສາລະການຮຽນຮູ້ໃນເນື້ອຫາວິຊານັ້ນຢ່າງທ່ອງແທ້ ຫຼື ຂາດຂະບວນການຄິດວິເຄາະ. ໂດຍສະຫຼຸບລວມແລ້ວ, ການຮຽນ-ການສອນປຽບເໝືອນການຮຽນແບບທ່ອງຈໍາເອົາເນື້ອຫາວິຊາ. ສ່ວນການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດມີຍັງມີໜ້ອຍຫຼາຍ ແລະ ຄຸນນະພາບຂອງງານວິໄຈກໍ່ຍັງບໍ່ໜ້າເຊື່ອຖືໄດ້. ກຸ່ມຄູທີ່ເຮັດການວິໄຈກໍ່ຈະເປັນຄົນກຸ່ມເດີມທີ່ມີຈາກສອງກຸ່ມຄື ກຸ່ມຫ້ອງການພາສາອັງກິດ ແລະ ກຸ່ມຫ້ອງການວິທະຍາສາດທໍາມະຊາດໃນທັງໝົດ 10 ຫ້ອງການທີ່ເຮັດການວິໄຈ.

(2) ສະພາບທີ່ເປັນບັນຫາກ່ຽວກັບການເຮັດການວິໄຈພາກປະຕິບັດຂອງຄູມີຄືແນວໃດ?

**ຝ່າຍບໍລິຫານວິທະຍາໄລຄູສະຫວັນນະເຂດ** ໃຫ້ທັດສະນະທີ່ຄ້າຍຄືກັນກ່ຽວກັບສະພາບບັນຫາຂອງການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນວ່າ ເນື້ອຫາຂອງຄູ່ການເຮັດການວິໄຈພາກປະຕິບັດຍັງບໍ່ທັນເປັນເອກະພາບກັນ, ຂໍ້ມູນລ້າສະໄໝ. ຄູໃຊ້ປະສົບການເພື່ອເຕີມເຕັມເນື້ອຫາໃຫ້ສົມບູນ. ພາລະວຽກງານຫຼາຍຂອງຄູເປັນອຸປະສັກຫຼັກທີ່ເຮັດໃຫ້ຄູປະຖິ້ມການເຮັດການວິໄຈພາກປະຕິບັດຂອງຕົນເອງ.

**ຄູຝຶກຫຼັກແຫຼ່ງ** ກ່າວວ່າ ຄູສ່ວນໃຫຍ່ຂາດຄວາມຮູ້ ແລະ ທັກສະຂອງການເຮັດການວິໄຈພາກປະຕິບັດ. ດັ່ງນັ້ນ, ມັນຈຶ່ງນໍາບັນຫາຫຼາຍປະການທີ່ເຮັດໃຫ້ພວກເຂົາເຈົ້າຢ້ານການເຮັດການວິໄຈ. ບາງບັນຫາເຫຼົ່ານັ້ນແມ່ນການກໍານົດບັນຫາການວິໄຈ, ການກໍານົດວັດຖຸປະສົງຂອງການວິໄຈ, ແລະ ສະຖິຕິເພື່ອການວິເຄາະ.

(3) ແນວທາງໃນການຊຸກຍູ້ສົ່ງເສີມ ແລະ ພັດທະນາການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນມີແນວໃດ?

ຝ່າຍບໍລິຫານວິທະຍາໄລຄູສະຫວັນນະເຂດ ໄດ້ໃຫ້ແນວທາງໃນການແກ້ໄຂບັນຫາກ່ຽວກັບການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ ດັ່ງນີ້:

1) ສະພາຄູຄວນສ້າງຄູ່ມືການເຮັດການວິໄຈພາກປະຕິບັດໃຫ້ເປັນເອກະພາບກັນສາລັຄູພາຍໃນ 8 ສະຖາບັນການສຶກສາຄູ. ຄູຄວນຊອກຫາວິທີການສອນ ແລະ ນະວັດຕະກຳໃໝ່ໆ ເພື່ອພັດທະນາການຮຽນຮູ້ຂອງຜູ້ຮຽນໃຫ້ໄດ້ດີ.

2) ຄູຄວນໃຊ້ເວລາພິເສດສຳລັບນັກສຶກສາເພື່ອຝຶກຫັດໃຫ້ຫຼາຍຂຶ້ນກ່ຽວກັບເຮັດການວິໄຈພາກປະຕິບັດ. ສະພາຄູຄວນຮູບແບບການເຮັດການວິໄຈພາກປະຕິບັດທີ່ເປັນມາດຕະຖານ ແລະ ເຊື່ອຖືໄດ້ສຳລັບຄູ ແລະ ນັກສຶກສາ.

3) ສະພາຄູຄວນເພື່ອຄວາມສາມາດຂອງຄູໃນດ້ານການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນໃຫ້ສູງຂຶ້ນໃນທຸກໆ ປີ. ຄູຄວນເຮັດການວິໄຈພາກປະຕິບັດເພື່ອຊອກຫາຄຳຕອບເພື່ອແກ້ໄຂບັນຫາຂອງຕົນເອງເພາະຈະເປັນການຝຶກຝົນຫຼໍ່ຫຼອມທັກສະຕ່າງໆ ຂອງຄູ.

4) ສະພາຄູຄວນຊີ້ນຳນັກສຶກສາໃຫ້ເຮັດການວິໄຈພາກປະຕິບັດເພື່ອແກ້ໄຂບັນຫາເລື່ອງການຮຽນ-ການສອນຂອງຕົນໂດຍຄວາມເບີກບານມ່ວນຊື່ນ ແລະ ແຂ່ງຂັນກັນ. ສິ່ງທີ່ສຳຄັນທີ່ສຸດ, ວິທະຍາໄລຄູ ຄວນມີວາລະເພື່ອໃຫ້ຄູເຮັດການວິໄຈພາກປະຕິບັດໃນຫ້ອງຮຽນໃນລະດັບຕ່າງໆຕາມຄວາມອາດສາມາດຂອງເຂົາເຈົ້າເພື່ອໃຫ້ບັນລຸວິໄສທັດຂອງວິທະຍາໄລຄູ.

ຄູຝຶກຫັດແຫຼ່ງ ໃຫ້ທັດສະນະວ່າ ວິທະຍາໄລຄູຄວນໃຫ້ການຝຶກອົບຮົມກ່ຽວກັບສະຖິຕິເພື່ອການວິໄຈ ໂດຍສະເພາະການວິເຄາະຂໍ້ມູນທາງໂປຣແກຣມສຳເລັດຮູບ SPSS, ການຈັດສັນງົບປະມານ ແລະ ສັນຫາຜູ້ຊ່ຽວຊານດ້ານການເຮັດການວິໄຈໃຫ້ແກ່ຄູໄດ້ປຶກສາຫາລື.

5.3 ສຶກສາສະມັດຖະນະການຮັບຮູ້ເລື່ອງການເຮັດການວິໄຈພາກປະຕິບັດໃນຫອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ

**ຕາຕະລາງ 5.3.1 ປຽບທຽບຄະແນນຈາກການເຮັດບົດທົດສອບວັດຄວາມຮູ້ໃນດ້ານການວິໄຈພາກປະຕິບັດຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ.ລາວ**

| ການປະເມີນຄວາມຮູ້ຄູດ້ານການວິໄຈພາກປະຕິບັດໃນຫ້ອງຮຽນ | ກ່ອນການທົດລອງ | | | ຫຼັງການທົດລອງ | | | df | t-test | p-value |
|---|---|---|---|---|---|---|---|---|---|
| | $\bar{X}$ | S.D. | ລະດັບຄວາມຮູ້ | $\bar{X}$ | S.D. | ລະດັບຄວາມຮູ້ | | | |
| | 18.00 | 5.58 | ຕໍ່າຫຼາຍ | 37.20 | 8.08 | ສູງ | 9 | -9.028 | 0.000 |

ຈາກຕາຕະລາງທີ 5.3.1 ຄະແນນສະເລ່ຍຈາກເຮັດບົດທົດສອບວັດຄວາມຮູ້ເລື່ອງການວິໄຈພາກປະຕິບັດຂອງຄູວິທະຍາໄລຄູສະຫວັນນະເຂດ ກ່ອນການທົດລອງ ແລະ ຫຼັງການທົດລອງ ພົບວ່າ ຄູຜູ້ຮັບການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ ມີຄວາມຮູ້ເລື່ອງການເຮັດການວິໄຈພາກປະຕິບັດຫຼັງການທົດລອງຢູ່ໃນລະດັບສູງ

($\bar{X}$ = 37.20, S.D. = 8.08) ຄະແນນສະເລ່ຍການເຮັດບົດທົດສອບວັດຄວາມຮູ້ເລື່ອງການເຮັດການວິໄຈພາກປະຕິບັດກ່ອນ ແລະ ຫຼັງການທົດລອງມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .01 ໂດຍ

ຄະແນນສະເລ່ຍຫຼັງການທົດລອງ (37.20 ຂອງຄະແນນເຕັມ 50 ) ສູງກວ່າຄະແນນສະເລ່ຍກ່ອນການທົດລອງ (18.00 ຂອງຄະແນນເຕັມ 50).

5.4 ຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ຫຼັງການຝຶກອົບຮົມພາກປະຕິບັດ ເລື່ອງການສົ່ງເສີມຄູໃນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນ

**ຕາຕະລາງທີ 5.4.1 ຄວາມເພິ່ງພໍໃຈທີ່ມີຕໍ່ຮູບແບບການຝຶກອົບຮົມເລື່ອງການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ.**

| ລາຍການປະເມີນ | ຄວາມເພິ່ງພໍໃຈ | | | |
|---|---|---|---|---|
| | $\overline{X}$ | S.D. | ລະດັບຄວາມເພິ່ງພໍໃຈ | ລະດັບທີ່ |
| **ດ້ານອົງປະກອບຂອງຮູບແບບ** | | | | |
| 1. ອົງປະກອບດ້ານຂະບວນການແບ່ງອອກເປັນ 4 ໄລຍະ ຄື ໄລຍະທີ 1 ໄລຍະກະກຽມ ໄລຍະທີ 2 ໄລຍະວາງແຜນ ໄລຍະທີ 3 ໄລຍະດຳເນີນການໃຫ້ຄຳປຶກສາ ໄລຍະທີ 4 ໄລຍະປະເມີນ | 4.9 | 0.411 | ຫຼາຍທີ່ສຸດ | 1 |
| 2. ອົງປະກອບທີ່ເປັນລະບົບສະໜັບສະໜູນ ໄດ້ແກ່ ການຮ່ວມມືຂອງທຸກຝ່າຍທີ່ກ່ຽວຂ້ອງຂອງຜູ້ບໍລິຫານ, ຄູຝຶກ, ຄູຜູ້ເຮັດການວິໄຈ | 4.8 | 0.422 | ຫຼາຍທີ່ສຸດ | 2 |
| 3. ອົງປະກອບດ້ານຂະບວນການມີຄວາມສອດຄ່ອງກັບອົງປະກອບທີ່ປັນລະບົບສະໜູນສະໜູນ | 4.7 | 0.483 | ຫຼາຍທີ່ສຸດ | 4 |
| 4. ອົງປະກອບຂອງຮູບແບບຝຶກອົບຮົມມີຄວາມຊັດເຈນເປັນລະບົບ | 4.8 | 0.422 | ຫຼາຍທີ່ສຸດ | 2 |
| **ຄະແນນສະເລ່ຍຄວາມເພິ່ງພໍໃຈໃນດ້ານຮູບແບບຂອງອົງປະກອບ** | 4.8 | 0.411 | ຫຼາຍທີ່ສຸດ | 2 |
| **ດ້ານການນຳໄປໃຊ້** | | | | |
| 5. ຂັ້ນຕອນການຫາອາສາສະມັກຄູຜູ້ເຂົ້າຮັບການຝຶກອົບຮົມຕາມຄຸນສົມບັດເບື້ອງຕົ້ນທີ່ສາມາດນຳໄປປະຕິບັດຈິງໄດ້ | 5 | 0.000 | ຫຼາຍທີ່ສຸດ | 1 |
| 6. ການຝຶອົບຮົມສຳລັຄູຜູ້ເຂົ້າຮັບການຝຶກອົບຮົມເປັນຜູ້ດູແລໃຫ້ຄຳປຶກສາມີຄວາມພ້ອມໃນດ້ານການເຮັດການວິໄຈ | 5 | 0.000 | ຫຼາຍທີ່ສຸດ | 1 |
| 7. ການຝຶກອົບຮົມສຳລັບຄູຜູ້ຮັບການດູແລໃນການເຮັດການວິໄຈເປັນການກຽມຄວາມພ້ອມສຳລັຄູໃນດ້ານການເຮັດການວິໄຈ | 5 | 0.000 | ຫຼາຍທີ່ສຸດ | 1 |
| 8. ການປະຊຸມປຶກສາຫາລືຮ່ວມກັນລະຫວ່າຄູຜູ້ດູແລໃຫ້ຄຳປຶກສາ ແລະ ຄູຜູ້ຮັບການດູແລ ເພື່ອການຈັບຄູ່ລະຫວ່າງຜູ້ໃຫ້ແລະຜູ້ຮັບ | 4.7 | 0.487 | ຫຼາຍທີ່ສຸດ | 4 |
| **ຄະແນນສະເລ່ຍຄວາມເພິ່ງພໍໃຈດ້ານການນຳຮູບແບບໄປໃຊ້** | 4.9 | 0.121 | ຫຼາຍທີ່ສຸດ | 2 |
| **ດ້ານຂະບວນການດູແລໃຫ້ຄຳປຶກສາ** | | | | |
| 9. ການປະຖົມນິເທດການຝຶກອົບຮົມວາງແຜນການນິເທດແລະການສອນ | 4.7 | 0.483 | ຫຼາຍທີ່ສຸດ | 5 |
| 10. ຈຳນວນຄັ້ງໃນການສັງເກດການສອນ ແລະ ການດູແລໃຫ້ຄຳປຶກສາ | 4.2 | 0.422 | ຫຼາຍທີ່ສຸດ | |
| 11. ການປະຊຸມກ່ອນການໃຫ້ຄຳປຶກສາກໍ່ໃຫ້ເກີດປະໂຫຍດໃນການພັດທະນາການຮຽນ-ການສອນ ແລະ ແນວທາງໃນການເຮັດການວິໄຈ. | 4.7 | 0.483 | ຫຼາຍທີ່ສຸດ | 5 |

| | | | | |
|---|---|---|---|---|
| 12. ການສັງເກດແລະເກັບລວບລວມຂໍ້ມູນມີຄວາມຍືດຢຸ່ນຕາມບັນຫາການວິໄຈຂອງຄູຜູ້ເຮັດການວິໄຈ. | 4.2 | 0.422 | ຫຼາຍທີ່ສຸດ | |
| 13. ການວິເຄາະ ແລະ ສທ້ອນຜົນຮ່ວມກັນເຮັດໃຫ້ເກີດການແລກປ່ຽນປະສົບຮ່ວມກັນລະຫວ່າງຄູຜູ້ໃຫ້ຄໍາປຶກສາແນະຄູຜູ້ຮັບການດູແລ. | 5.0 | 0.000 | ຫຼາຍທີ່ສຸດ | 1 |
| 14. ການປະຊຸມຫຼັງການໃຫ້ຄໍາປຶກສາແນະນໍາ. | 5.0 | 0.000 | ຫຼາຍທີ່ສຸດ | 1 |
| 15. ການປະເມີນທັງລະຫວ່າງກ່ອນ ແລະ ຫຼັງການດູແລໃຫ້ຄໍາປຶກສາມີຄວາມໝາຍຄວາມສໍາຄັນ. | 5.0 | 0.000 | ຫຼາຍທີ່ສຸດ | 1 |
| 16. ການຮ່ວມມືກັນຊ່ວຍໃຫ້ຂະບວນການດູແລໃຫ້ຄໍາປຶກສາມີປະສິດທິພາບຫຼາຍຂຶ້ນ. | 4.4 | 0.516 | ຫຼາຍທີ່ສຸດ | |
| 17. ການຮຽນຮູ້ຮ່ວມກັນຊ່ວຍສົ່ງເສີມໃຫ້ຂະບວນການດູແລໃຫ້ຄໍາປຶກສາມີປະສິດທິພາບສູງຂຶ້ນ. | 4.2 | 0.422 | ຫຼາຍທີ່ສຸດ | |
| 18. ການສະທ້ອນ ແລະ ວິເຄາະຜົນຊ່ວຍໃຫ້ຂະບວນການດູແລໃຫ້ຄໍາປຶກສາມີປະສິດທິພາບຫຼາຍຂຶ້ນ. | 5.0 | 0.000 | ຫຼາຍທີ່ສຸດ | 1 |
| 19. ຄວາມໄວ້ເນື້ອເຊື່ອໃຈຊ່ວຍສົ່ງເສີມໃຫ້ຂະບວນການສົ່ງເສີມການດູແລໃຫ້ຄໍາປຶກສາແນະນໍາມີປະສິດທິພາບສູງຍິ່ງຂຶ້ນ. | 4.2 | 0.422 | ຫຼາຍທີ່ສຸດ | |
| 20. ການກວດສອບຄວາມສໍາພັນຊ່ວຍສົ່ງເສີມໃຫ້ຂະບວນການດູແລໃຫ້ຄໍາປຶກສາມີປະສິດທິພາບສູງຂຶ້ນ. | 4.2 | 0.422 | ຫຼາຍທີ່ສຸດ | |
| **ຄະແນນສະເລ່ຍຄວາມເພິ່ງພໍໃຈດ້ານຂະບວນການດູແລໃຫ້ຄໍາປຶກສາແນະນໍາ** | 4.6 | 0.299 | ຫຼາຍທີ່ສຸດ | |
| **ດ້ານຜົນຂອງການໃຊ້ຮູບແບບ** | | | | |
| 21. ການໃຊ້ຮູບແບບຊ່ວຍພັດທະນາສະມັດຖະນະການສອນຂອຄູຜູ້ຮັບການດູແລໃນວິທະຍາໄລຄູສະຫວັນນະເຂດໄດ້ດີ. | 5 | 0.000 | ຫຼາຍທີ່ສຸດ | 1 |
| 22. ການໃຊ້ຮູບແບບຊ່ວຍພັດທະນາການເຮັດການວິໄຈຊ່ວຍພັດທະນາຂອງຄູຜູ້ເຮັດການດູແລໃນວິທະຍາໄລຄູສະຫວັນນະເຂດໄດ້ດີ. | 5 | 0.000 | ຫຼາຍທີ່ສຸດ | 1 |
| 23. ການໃຊ້ຮູບແບບຊ່ວຍໃຫ້ຄູຜູ້ດູແລໃຫ້ຄໍາປຶກສາ ແລະ ຜູ້ຮັບການດູແລມີການທໍາງານຮ່ວມກັນ. | 4.4 | 0.516 | ຫຼາຍທີ່ສຸດ | 3 |
| 24. ການໃຊ້ຮູບແບບຊ່ວຍໃຫ້ຄູຜູ້ດູແລໃຫ້ຄໍາປຶກສາສາມາດພັດທະນາການດູແລໃຫ້ຄໍາປຶກສາ. | 5 | 0.000 | ຫຼາຍທີ່ສຸດ | 1 |
| 25. ການໃຊ້ຮູບແບບດູແລໃຫ້ຄໍາປຶກສາແນະນໍາຊ່ວຍພັດທະນາວິຊາຊີບແບບຕໍ່ເນື່ອງ ແລະ ຍືນຍົງ. | 4.8 | 0.422 | ຫຼາຍທີ່ສຸດ | 2 |
| **ຄະແນນຄວາມເພິ່ງພໍໃຈດ້ານຜົນການໃຊ້ຮູບແບບ** | 4.84 | 0.188 | ຫຼາຍທີ່ສຸດ | 2 |
| **ຄະແນນສະເລ່ຍຄວາມເພິ່ງພໍໃຈໃນພາບລວມ** | 4.78 | 0.255 | ຫຼາຍທີ່ສຸດ | 3 |

ຈາກຕາຕະລາງທີ 5.4.1 ພົບວ່າ ຄູຜູ້ດູແລໃຫ້ຄາປຶກສາແນະນາມີຄວາມເພິ່ງພໍໃຈຕໍ່ລະບົບການດູແລໃຫ້ຄາປຶກສາແນະນໍາໃນພາບລວມຢູ່ໃນລະດັບຄວາມເພິງພໍໃຈຫຼາຍທີ່ສຸດ ($\bar{X}$ = 4.78, S.D.= 0.255) ຍອມຮັບສົມມຸດຕິຖານຂໍ້ທີ 4 ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ດ້ານການນາໄປໃຊ້ຂອງຮູບແບບມີຄະແນນສະເລ່ຍສູງສຸດ ($\bar{X}$ = 4.90, S.D.= 0.121) ຮອງລົງມາໄດ້ແກ່ ຜົນຂອງການໃຊ້ຮູບແບບ ($\bar{X}$ = 4.84, S.D.= 0.188) ແລະ ອົງປະກອບຂອງຮູບແບບ ( $\bar{X}$ = 4.80, S.D. = 0.411) ແລະ ດ້ານຂະບວນການຂອງຮູບແບບ ($\bar{X}$ = 4.6, S.D. = 0.299).

ເມື່ອພິຈາລະນາລາຍລະອຽດໃນແຕ່ລະດ້ານ ພົບວ່າ ດ້ານອົງປະກອບຂອງຮູບແບບ ຄູຜູ້ດູແລໃຫ້ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດໃນດ້ານອົງປະກອບດ້ານຂະບວນການທີ່ເປັນ 4 ໄລຍະ ($\bar{X}$ = 4.90, S.D. = 0.411) ຮອງ

ລົງມາ ຄື ($\overline{X}$ = 4.80, S.D. = 0.422) ຮອງລົງມາແມ່ນອົງປະກອບດ້ານລະບົບສະໜັບສະໜູນ ($\overline{X}$ = 5.00, S.D. = 0.000) ແລະ ອົງປະກອບຂອງຮູບແບບມີຄວາມຊັດເຈນເປັນລະບົບ ($\overline{X}$ = 4.80, S.D. = 0.422).

ດ້ານການນຳໃຊ້ຮູບແບບ ພົບວ່າ ຂໍ້ທີ່ມີຄະແນນສະເລ່ຍສູງສຸດ ຄື ຂັ້ນການຫາອາສາສະໝັກຄູຜູ້ດູແລໃຫ້ຄຳປຶກສາທີ່ມີຄຸນສົມບັດເບື້ອງຕົ້ນ ($\overline{X}$ = 5.00, S.D. = 0.000) ຮອງລົງມມແມ່ນການຝຶກອົບຮົມສາລັບຄູຜູ້ດູແລໃຫ້ຄາປຶກສາຊ່ວຍໃຫ້ຄູຜູ້ດູແລມີຄວາມພ້ອມໃນການດູແລໃຫ້ຄຳປຶກສາຄູຜູ້ເຮັດການວິໄຈ ($\overline{X}$ = 5.00, S.D. = 0.000) ແລະ ການຝຶກອົບຮົມສຳລັຄູຜູ້ຮັບການດູແລເປັນການກະກຽມຄວາມພ້ອມສຳລັບຄູຜູ້ເຮັດການວິໄຈ ($\overline{X}$ = 5.00, S.D. = 0.000).

ດ້ານຂະບວນການໃຫ້ຄຳປຶກສາແນະນຳ ພົບວ່າ ຂໍ້ທີ່ມີຄະແນນສະເລ່ຍສູງທີ່ສຸດ ຄື ຂໍ້ທີ 13 ວິເຄາະ ແລະ ສະທ້ອນຜົນຮ່ວມກັນໃຫ້ເກີດການແລກປ່ຽນຮຽນຮູ້ຮ່ວມກັນ ແລະ ກັນຂອງຄູຜູ້ດູແລໃຫ້ຄຳປຶກສາ ($\overline{X}$ = 5.00, S.D. = 0.000), ຮອງລົງມາແມ່ນ ຂໍ້ທີ 14 ການປະຊຸມຫຼັງການດູແລໃຫ້ຄາປຶກສາແນະນາ ($\overline{X}$ = 5.00, S.D. = 0.000), ຂໍ້ທີ 15 ການປະເມີນທັງກ່ອນ, ລະຫວ່າງ, ແລະ ຫຼັງການໃຊ້ຮູບແບບດູແລໃຫ້ຄາປຶກສາແນະນາມີຄວາມໝາຍ ແລະ ຄວາມສຳຄັນ ($\overline{X}$ = 5.00, S.D. = 0.000), ຂໍ້ທີ 18 ການສະທ້ອນ ແລະ ການວິເຄາະຜົນຊ່ວຍໃຫ້ຂະບວນການດູແລໃຫ້ຄຳປຶກສາແນະນຳມີປະສິດທິພາບສູງຂຶ້ນ ($\overline{X}$ = 5.00, S.D. = 0.000).

## 6. ອະພິປາຍຜົນການວິໄຈ

ຜົນການດຳເນີນການວິໄຈໃນຊ່ວງທຳອິດ ຄື ການສຶກສາຂໍ້ມູນທົ່ວໄປກ່ຽວກັບສະພາບປັດຈຸບັນ, ບັນຫາ, ແລະ ຄວາມຕ້ອງການພັດທະນາຄູສອນດ້ານການວິໄຈພາກປະຕິບັດ ກ່ອນດຳເນີນການພັດທະນາຄູດ້ານການເຮັດການວິໄຈພາກປະຕິບັດ ຜູ້ວິໄຈພົບປະເດັນທີ່ໜ້າສົນໃຈ ແລະ ນຳເອົາມາອະພປາຍດັ່ງນີ້

ຜົນການດຳເນີນການສຳຫຼວດສະພາບປັດຈຸບັນ, ສະພາບບັນຫາ, ແລະ ສະພາບຄວາມຕ້ອງການດ້ານການພັດທະນາການເຮັດການວິໄຈພາກປະຕິບັດຂອງຄູວິທະຍາໄລຄູສະຫວັນນະເຂດ ໂດຍການສຳຫຼວດຈາກແບບສອບຖາມຄູໄດ້ພົບວ່າ ໂດຍພາບລວມຄວາມຮູ້ຂອງຄູດານການເຮັດການວິໄຈພາກປະຕິບັດຢູ່ໃນລະດັບມີບັນຫາຫຼາຍ. ການໃຊ້ສະຖິຕິການວິໄຈ, ການຂຽນອະພິປາຍຜົນ, ແລະການຂຽນຜົນການວິໄຈຄືບັນຫາຫຼັກຂອງຄູ ວຄສ. ໃນດ້ານຂະບວນການສົ່ງເສີມຂະບວນການເຮັດການວິໄຈພາກປະຕິບັດ ໂດຍພາບລວມຢູ່ໃນລະດັບມີບັນຫາຫຼາຍ. ການຈັດສັນງົບປະມານ ຄື ອຸປະສັກຂອງຂະບວນການສົ່ງເສີມການເຮັດການວິໄຈ. ຜົນການສຳຫຼວດການໃຫ້ຄວາມສຳຄັນຂອງວິທະຍາໄລຄູຕໍ່ການສົ່ງເສີມການເຮັດການວິໄຈຂອງຄູ ໂດຍພາບລວມຢູ່ໃນລະດັບມີບັນຫຼາຍ. ວິທະຍາໄລຄູສະຫວັນນະເຂດມີບັນຫາໃນການໃຫ້ຄວາມສຳຄັນເປັນອັນດັບທີ່ມີບັນຫາຫຼາຍທີ່ສຸດ.

ການສຳຫຼວດທັດສະນະຄະຕິຂອງຝ່າຍບໍລິຫານ ແລະ ຄູຝຶກຫຼັກແຫ່ງຕໍ່ກັບສະພາບການຮຽນການສອນ ແລະ ການເຮັດການວິໄຈຂອງຄູ, ສະພາບທີ່ເປັນບັນຫາ, ແລະ ແນວທາງໃນການແກ້ໄຂພົບວ່າ ການຮຽນ-ການສອນຂອງຄູຍັງເປັນແບບທ່ອງຈຳ ແລະ ເນັ້ນການສອນແບບບັນຍາຍທີ່ມີການມອບວຽກບ້ານຫຼັງການບັນຍາຍເປັນຫຼັກ. ການຮຽນ-ການສອນທີ່ຍັງເອົາເນື້ອໃນເປັນຫຼັກທີຕ້ອງການໃຫ້ຜູ້ຮຽນເຂົ້າໃຈເຊິ່ງຂາດວິທີການຄິດ ແລະ ວິເຄາະເຖິງສິ່ງທີ່ໄດ້ຮຽນ ແລະ ສະທ້ອນເຖິງສິ່ງທີ່ຜູ້ຮຽນຮູ້ສຶກ ແລະ ນຳໃຊ້ປະຍຸກສິ່ງທີ່ໄດ້ຮຽນມາ. ສ່ວນການເຮັດການວິໄຈພາກປະຕິບັດຂອງຄູພົບວ່າ ຝ່າຍບໍລິຫານ ແລະ ຄູຝຶກຫຼັກກ່າວວ່າ ການເຮັດການວິໄຈຂອງຄູຍັງມີໜ້ອຍຫຼາຍ, ຄຸນນະພາບຂອງການເຮັດການວິໄຈຍັງບໍ່ເປັນໜ້າເຊື່ອຖືເທົ່າທີ່ຄວນ, ຈຳນວນຄູຜູ້ທີ່ເຮັດງານວິໄຈມີໜ້ອຍ, ຄວາມຮູ້ຂອງຄູດ້ານການເຮັດການວິໄຈຍັງຈຳກັດ, ພາລະໜ້າທີ່ອື່ນຂອງຄູຍັງມີຫຼາຍ, ແລະ ຄູ່ມືການເຮັດການວິໄຈ ແລະ ຫຼັກສູດການວິໄຈຍັງເກົ່າ ແລະ ບໍ່ມີ

ການອັບເດດໃຫ້ທັນກັບຍຸກສະໄໝ ສອດຄ່ອງກັບ ສິດທິສິມບູນ (2006) ກ່າວວ່າ ການພັດທະນາຄວາມຮູ້ ແລະ ຄວາມເຂົ້າໃຈຂອງຄູຊ່ວຍໃຫ້ຄູບັນລຸການເຮັດການວິໄຈພາກປະຕິບັດໄດ້ດີ.

ສ່ວນທັດສະນະຂອງຝ່າຍບໍລິຫານ ແລະ ຄູຝຶກຫຼັກຕໍ່ແນວທາງໃນການແກ້ໄຂບັນຫາພົບວ່າ ການພັດທະນາຄູ່ມືການເຮັດການວິໄຈ, ລະບົບການຊ່ວຍເຫຼືອຄູໃໝ່ທີ່ຍັງມີຄວາມຕ້ອງການດ້ານການພັດທະນາຄວາມຮູ້, ທັກສະ, ແລະ ຄວາມສາມາດໃນການເຮັດການວິໄຈພາກປະຕິບັດຄວນໄດ້ຮັບການພັດທະນາ ແລະ ປັບປຸງໂດຍດ່ວນ. ການສ້າງເວທີໃຫ້ຄູໄດ້ມີໂອກາດເຜີຍແຜ່ງານວິໄຈໃນສະຖານບັນສ້າງຄູກໍ່ເປັນອີກຊ່ອງທາງໜຶ່ງທີ່ເຮັດໃຫ້ຄູໄດ້ມີໂອກາດໃນການພັດທະນາປັບປຸງວິທີການເຮັດການວິໄຈ ເຊິ່ງສອດຄ່ອງກັບ ບຸນລັບທະວີ ແລະ ແສງພະເທບຕິງ (2002) ທີ່ກ່າວວ່າ ສະພາບປັດຈຸບັນທີ່ເປັນບັນຫາຂອງຄູໃນການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນມາຈາກຄວາມຮູ້ທີ່ມີຈຳກັດ, ແລະ ແນວຄິດຂອງການເຮັດການວິໄຈຂອງຄູເປັນອຸປະສັກໃນການເຮັດການວິໄຈໃຫ້ສຳເລັດ.

ຜົນການທົດອລງໃຊ້ຮູບແບບດູແລໃຫ້ຄຳປຶກສາແນະນຳຄູໃນການເຮັດການວິໄຈ ຈາກແບບປະເມີນຜົນສຳ ເລັດທາງການຮຽນຂອງນັກສຶກສາທີ່ເກີດຈາກການເຮັການວິໄຈພາກປະຕິບັດຂອງຄູຜູ້ຮັບການດູແລໃນການເຮັດການວິໄຈພາກປະຕິບັດ ພົບວ່າ ຫຼັງການທົດລອງເຮັດການວິໄຈພາກປະຕິບັດຂອງຄູຜູ້ຮັບການດູແລ ນັກສຶກສາມີຜົນສຳ ເລັດທາງການຮຽນສູງກວ່າກ່ອນການທົດລອງຢ່າງມີຄວາມສຳຄັນທາງສະຖິຕິທີ່ .05 ໃນທຸກລາຍງານການວິໄຈ ທັງນີ້ອາດເປັນເພາະວິທີການແກ້ໄຂບັນຫາ ຫຼື ພັດທະນາທີ່ຄູຜູ້ຮັບການດູແລໃນການເຮັດການວິໄຈຄັດເລືອກມາໃຊ້ນັ້ນເປັນໄປຕາມຫຼັກການ, ເຫດຜົນ, ແລະມີຜົນການວິໄຈຮອງຮັບວ່າເປັນວິທີທີ່ມີປະສິດທິພາບ ເມື່ອນຳມາໃຊ້ໃນການວິໄຈໂດຍປັບປຸງ ແລະ ປະຍຸກໃຫ້ເໝາະສົມກັບສະພາບບັນຫາ ໂດຍຈັດກຽມການຮຽນການສອນ ແລະ ສື່ປະສົມທີ່ມີປະສິດທິພາບທີ່ເອື້ອອຳນວຍຕໍ່ການຮຽນຮູ້ຈິງພົບວ່າ ສາມາດເຮັດໃຫ້ຜູ້ຮຽນມີຜົນການຮຽນຮູ້ດີຂຶ້ນເຊັ່ນດຽວກັນ. ນອກຈາກນີ້, ການດຳເນີນການແກ້ໄຂບັນຫາຕາມຂະບວນການການວິໄຈພາກປະຕິບັດຢ່າງເປັນຂະບວນການພາຍໃຕ້ການດູແລໃຫ້ຄຳປຶກສາ. ພ້ອມທັງການໃຫ້ຄຳປຶກສາຄູຜູ້ດູແລເປັນຮູບແບບທີ່ຄູຜູ້ດູແລສາມາດຊ່ວຍພັດທະນາຄວາມສາມາດໃນການເຮັດການວິໄຈຂອງຄູຜູ້ຮັບການດູແລ ແລະພັດທະນາຄວາມສາມາດໃນການຈັດການຮຽນການສອນ ແລະ ການເຮັດການວິໄຈທີ່ມີປະສິດທິພາບ ສົ່ງຜົນໂດຍກົງກັບຄຸນນະພາບການຮຽນຂອງຜູ້ຮຽນໃນຂະບວນການດູແລໃຫ້ຄຳປຶກສາໃນການເຮັດການວິໄຈຕັ້ງແຕ່ການວິເຄາະບັນຫາການວິໄຈຈົນເຖິງການສະຫຼຸບ ແລະ ການຂຽນລາຍງານການວິໄຈເຊິ່ງຈາກປະສົບການຂອງຄູຜູ້ດູແລທີ່ຖືວ່າເປັນຜູ້ຊ່ຽວຊານທາງດ້ານສາດການສອນ ແລະ ເຮັດການວິໄຈ ຈະຊ່ວຍໃຫ້ຄູໃໝ່ທີ່ຮັບການດູແລໃນການເຮັດການວິໄຈໄດ້ພັດທະນາຄວາມສາມາດໃນການຈັດການຮຽນການສອນແລະການເຮັດການວິໄຈພາກປະຕິບັດໄດ້ດີຍິ່ງຂຶ້ນ ດັ່ງທີ່ ກູດ (Good, C.V. 1973) ກ່າວວ່າ ການນິເທດເປັນການຊ່ວຍເຫຼືອຄູໃນການປັບປຸງການສອນເຊິ່ງເປັນການກະຕຸ້ນໃຫ້ເກີດຄວາມຈະເລີນກ້າວໜ້າທາງວິຊາຊີບ ແລະ ການພັດທະນາຕົນເອງໃນເລື່ອງການເລືອກ ແລະ ປັບປຸງຈຸດປະສົງການສອນ, ສື່ການສອນ, ວິທີການສອນ, ແລະ ການປະເມີນການຮຽນເຊິ່ງສອດຄ່ອງກັບ ວັຊຣາ ເລົ່າຮຽນດີ (ພ.ສ. 2550) ກ່າວວ່າ ຈຸດມຸ້ງໝາຍຂອງການນິເທດ ຄື ການປັບປຸງຂະບວນການສອນ ແລະ ຂະບວນການຮຽນຮູ້ ແລະ ສົ່ງເສີມພັດທະນາຄວາມຈະເລີນກ້າວໜ້າຂອງວິຊາຊີບຄູທີ່ສົ່ງຜົນໂດຍກົງຕໍ່ການຮຽນຂອງນັກສຶກສາ ແລະ ສອດຄ່ອງກັບຜົນການສຶກສາຂອງ ອໍຣະວັນ ເໜືອນສຸກໃຈ (ພ.ສ. 2545) ທີ່ກ່າວວ່າ ການນິເທດການສອນນີ້ຊ່ວຍໃຫ້ຄູສາມາດເຮັດການວິໄຈພາກປະຕິບັດ ສາມາດພັດທະນາທາງດ້ານການຮຽນການສອນທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນໄດ້ດີຍິ່ງຂຶ້ນ.

## 7. ການສະຫຼຸບຜົນການວິໄຈ

ການພັດທະນາຄູດ້ານການວິໄຈພາກປະຕິບັດໃນຫ້ອງຮຽນສຳລັບຄູວິທະຍາໄລຄູສະຫວັນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍມີວັດຖຸປະສົງການວິໄຈ 3 ຂໍ້ ຄື 1) ເພື່ອສຶກສາສະພາບປັດຈຸບັນ, ສະພາບບັນຫາ, ແລະ ສະພາບຄວາມຕ້ອງການໃນການພັດທະນາດ້ານການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດເປັນແນວໃດກ່ອນການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງການຮຽນ,
2) ເພື່ອສຶກສາສະມັດຖະນະການຮັບຮູ້ເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດຫຼັງການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ, ແລະ 3) ເພື່ອສຶກສາຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດຫຼັງການຝຶກອົບຮົມເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນ.

7.1 ຜົນການສຶກສາຄວາມຮູ້ຂອງຄູວິທະຍາໄລຄູດ້ານການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍລວມພົບວ່າ “ຢູ່ໃນລະດັບຍາກຫຼາຍ” ($\bar{X}$ = 3.83, S.D. = 0.82 ). ຂະບວນການສົ່ງເສີມການເຮັດການວິໄຈພາກປະຕິບັດຂອງຄູ ພົບວ່າ ການສົ່ງເສີມຂະບວນການເຮັດການິວໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ໂດຍພາບລວມຢູ່ໃນລະດັບ “ຍາກຫຼາຍ” ($\bar{X}$ = 3.79, S.D. = 0.92). ຜົນການສາຫຼວດການໃຫ້ຄວາມສາຄັນດ້ານການວິໄຈພາກປະຕິບັດໃນຫ້ອງຮຽນ ພົບວ່າ ການໃຫ້ຄວາມສາຄັນຂອງວິທະຍາໄລຄູດ້ານການສົ່ງເສີມການເຮັດການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍາໄລຄູສະຫວັນນະເຂດ ສປປ. ລາວ ພົບວ່າ ໂດຍລວມ ຢູ່ໃນລະດັບພົບ “ບັນຫາໃນລະດັບຫຼາຍ” ($\bar{X}$ = 3.89, S.D. = 0.92). ຜົນການສຶກສາສະພາບປັດຈຸບັນດ້ານການຈັດການຮຽນ-ການສອນໃນວິທະຍາໄລຄູສະຫວັນນະເຂດ ຈາກການສຳພາດຄະນະນຳຜູ້ອຳນວຍການວິທະຍາໄລຄູ ແລະ ຄູຝຶກຫຼັກແຫຼ່ງວິທະຍາໄລຄູສະຫວັນນະເຂດ ພົບວ່າ ການຮຽນ-ການສອນຍັງເປັນແບບເອົາຄູເປັນໃຈກາງ ໂດຍເນັ້ນເນື້ອຫາເປັນຫຼັກທີ່ຂາດຂະບວນການຄິດວິເຄາະເຊິ່ງເກີດຈາກການທີ່ຄູຍັງຂາດວິທີການສອນທີ່ເໝາະສົມ ແລະ ການສ້າງນະວັດຕະກຳທີ່ເປັນສື່ເພື່ອສ້າງອົງຄວາມຮູ້ຄວາມເຂົ້າໃຈໃຫ້ແກ່ນັກສຶກສາໄດ້ຄົ້ນຄິດ. ສຳລັບງານວິໄຈຂອງຄູກໍ່ຍັງພົບບັນຫາຢູ່ຫຼາຍດ້ານບໍ່ວ່າຄວາມຮູ້ພື້ນຖານເລື່ອງການວິໄຈ, ຄວາມສາມາດດ້ານການເຮັດການວິໄຈຂອງຄູ, ແລະ ການຂາດແຄນງົບປະມານດ້ານການສົ່ງເາສີມການເຮັດການວິໄຈ. ຄູທີ່ມີບັນຫາຫຼາຍກວ່າໝູ່ສ່ວນໃຫຍ່ຈະເປັນຄູໃໝ່ທີ່ຍັງຕ້ອງການຄວາມຮູ້ ແລະ ປະສົບການໃນການເຮັດການວິໄຈເຊິ່ງຕ້ອງການທັງຄວາມຮູ້ ແລະ ການຊ່ວຍເຫຼືອຈາກຄູຜູ້ມີປະສົບການຫຼາຍກວ່າເຊິ່ງການສ້າງຄູ່ມືການເຮັດການວິໄຈພາກປະຕິບັດ ແລະ ການສ້າງລະບົບການຊ່ວຍເຫຼືອຄູໃໝ່ອາດເປັນໜຶ່ງທາງເລືອກໃນຫຼາຍວິທີການແກ້ໄຂທີ່ດີໃນຄັ້ງນີ້ທີ່ຜູ້ວິໄຈເລືອກໃຊ້.

7.2 ຜົນການສຶກສາສະມັດຖະນະການຮັບຮູ້ເລື່ອງການວິໄຈພາກປະຕິບັດໃນຫ້ອງຮຽນຂອງຄູວິທະຍໄລຄູສະຫວັນນະເຂດ ພົບວ່າ ຫຼັງການຝຶກອົບຮົມລະດັບຄວາມຮູ້ຄວາມເຂົ້າໃຈຂອງຄູວິທະຍາໄລຄູສະຫວັນນະເຂດ (17) ສູງກວ່າກ່ອນການຝຶກອົບຮົມ (37.20 ຂອງຄະແນນເຕັມ 50 ) ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .01

7.3 ຜົນການສຶກສາລະດັບຄວາມເພິ່ງພໍໃຈຂອງຄູວິທະຍາໄລຄູສະຫວັນນະເຂດຫຼັງການຝຶກອົບຮົມເລື່ອງການເຮັດການວິໄຈພາກປະຕິບັດ ພົບວ່າ ພົບວ່າ ຄູຜູ້ດູແລໃຫ້ຄຳປຶກສາແນະນຳມີຄວາມເພິ່ງພໍໃຈຕໍ່ລະບົບການດູແລໃຫ້ຄຳປຶກສາແນະນຳໃນພາບລວມຢູ່ໃນລະດັບຄວາມເພິງພໍໃຈຫຼາຍທີ່ສູດ ($\overline{X}$ = 4.78, S.D.= 0.255) ຍອມຮັບສົມມຸດຕິຖານຂໍ້ທີ 4 ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ດ້ານການນຳໄປໃຊ້ຂອງຮູບແບບມີຄະແນນສະເລ່ຍສູງສຸດ ($\overline{X}$ = 4.90, S.D.= 0.121) ຮອງລົງມາໄດ້ແກ່ ຜົນຂອງການໃຊ້ຮູບແບບ ($\overline{X}$ = 4.84, S.D.= 0.188) ແລະ ອົງປະກອບຂອງຮູບແບບ ($\overline{X}$ = 4.80, S.D. = 0.411) ແລະ ດ້ານຂະບວນການຂອງຮູບແບບ ($\overline{X}$ = 4.6, S.D. = 0.299).

## 8. ຂໍ້ສະເໜີແນະນໍາ

### 8.1 ຂໍ້ສະເໜີແນະນໍາໃນການນໍາຜົນການວິໄຈໄປໃຊ້

(1) ຜົນການສຶກສາຄັ້ງນີ້ ຮູບແບບການດູແລໃຫ້ຄໍາປຶກສາທີ່ພັດທະນາຂຶ້ນເປັນຮູບແບບທີ່ມີປະສິດທິພາບ ສາມາດພັດທະນາສະມັດຖະນະການເຮັດການວິໄຈພາກປະຕິບັດຂອງຄູຜູ້ຮັບການດູແລີດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເຊິ່ງເປັນຜົນຈາກການວິເຄາະການສຶກສາສະພາບບັນຫາ ແລະ ຂໍ້ມູນທີ່ເປັນພື້ນຖານທີ່ຈໍາເປັນໃນການພັດທະນາຮູບແບບ ຕະຫຼອດຮອດຈົນຮູບແບບດູແລທີ່ພັດທະນາຂຶ້ນເປັນຮູບແບບທີ່ອາໃສການຮ່ວມມືຂອງຜູ້ຊ່ຽວຊານ/ ປະສົບການ ເຮັດໜ້າທີ່ດູແລຊ່ວຍເຫຼືອ ແລະ ຕິດຕາມ ຜູ້ເລີ່ມເຂົ້າສູ່ວິຊາຊີບ ຫຼື ຜູ້ຮັບການດູແລ ເຊິ່ງຮູບແບບການດູແລໃຫ້ຄໍາປຶກສາຈະເກີດປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ ຫາກເກີດຄວາມເຕັມໃຈ ແລະ ສະໝັກໃຈຂອງທັງຜູ້ເຮັດໜ້າທີ່ດູແລໃຫ້ຄໍາປຶກສາ ແລະ ຜູ້ຮັບການດູແລ. ດັ່ງນັ້ນ, ການນໍາຮູບແບບດູແລໃຫ້ຄໍາປຶກສາໄປໃຊ້ປະໂຫຍດຕ້ອງຢູ່ບົນພື້ນຖານຂອງຄວາມເຕັມໃຈ ແລະ ສະໝັກໃຈໃນການພັດທະນາວິຊາຊີບຮ່ວມກັນລະຫວ່າງຜູ້ໃຫ້ ແລະ ຜູ້ຮັບການດູແລໃຫ້ຄໍາປຶກສາແນະນໍາໃນການເຮັດການວິໄຈພາກປະຕິບັດ.

### 8.2 ຂໍ້ສະເໜີແນະນໍາໃນການວິໄຈຄັ້ງຕໍ່ໄປ

1) ຜົນການສຶກສາຄັ້ງນີ້ ສະແດງໃຫ້ເຫັນວ່າ ຮູບແບບດູແລໃຫ້ຄໍາປຶກສາແນະນໍາດ້ານການຊ່ວຍເຫຼືອໃຫ້ຄູເຮັດການວິໄຈພາກປະຕິບັດສາມາດສົ່ງເສີມພັດທະນາສະມັດຖະນະການເຮັດການວິໄຈຂອງຄູຜູ້ຮັບການດູແລໄດ້ຕາມສົມມຸດຕິຖານທີ່ຕັ້ງໄວ້. ດັ່ງນັ້ນ, ຄວນສຶກສາວິໄຈເພື່ອນໍາຮູບແບບດູແລໃຫ້ຄໍາປຶກສາໄປທົດລອງປຽບທຽບກັບຮູບແບບການພັດທະນາສະມັດຖະນະອື່ນກັບການສອນ ແລະ ການເຮັດການວິໄຈໃນຫ້ອງຮຽນຮູບແບບອື່ນໆ ເຊັ່ນ ປຽບທຽບສະມັດຖະນະການສອນທີ່ເກີດຈາກການໃຊ້ຮູບແບບດູແລໃຫ້ຄໍາປຶກສາແນະນໍາກັບຮູບແບບການນິເທດແບບຫຼາຍຫຼາຍວິທີ.

2) ຜົນການວິໄຈຄັ້ງນີ້ ຄວນມີການສຶກສາກ່ຽວກັບຜົນຂອງການພັດທະນາສະມັດຖະນະການສອນ ແລະ ການເຮັດການວິໄຈພາກປະຕິບັດໂດຍຮູບແບບດູແລໃຫ້ຄໍາປຶກສາໃນກຸ່ມນັກສຶກສາຄູທີຝຶກປະສົບການວິຊາຊີບໃນສາຂາອື່ນ ຫຼື ວິທະຍາໄລອື່ນໆກໍ່ໄດ້.

3) ຜົນການວິໄຈຄັ້ງນີ້ ເປັນການພັດທະນາຮູບແບບດູແລໃຫ້ຄໍາປຶກສາແນະນໍາ ໂດຍຄູຜູ້ດູແລໃຫ້ຄໍາປຶກສາແນະນໍາເປັນຜູ້ໃຫ້ການດູແລໃຫ້ຄໍາປຶກສາ ແລະ ຄວນມີການສຶກສາເພີ່ມເຕີມໂດຍຮູບແບບການນິເທດແບບອື່ນໆ ໃນການສົ່ງເສີມສະມັດຖະນະການສອນ ແລະ ການເຮັດການວິໄຈພາກປະຕິບັດ ໂດຍນັກສຶກສາເປັນຜູ້ພັດທະນາຕົນເອງ ເຊັ່ນ ການນິເທດແບບເພື່ອນຊ່ວຍເພື່ອນ.

**ເອກະສານອ້າງອີງ**

ວິທະຍາໄລຄູສະຫວັນນະເຂດ. (2014. ໜ້າທີ 22). **ບົດສະຫຼຸບປະຈໍາປີຂອງວິທະຍາໄລຄູສະຫວັນນະເຂດ.** ສໍາເນົາ.

ມະຫາວິທະຍາໄລມະຫາສາຣະຄາມ. (ພ.ສ. 2540. ໜ້າທີ 156). **ເອກະສານປະກອບການສອນວິຊາບໍລິຫານການສຶກສາ 501701 ການບໍລິຫານຊັບພະຍາກອນມະນຸດ ແລະ ຊັບພະຍາກອນການສຶກສາ ເຫຼັ້ມທີ 2.** ມະຫາສາຣະຄາມ : ອະພິຊາດການພິມ.

ບັນຊາ ອື້ງສະກຸລ. (ພ.ສ. 2540. ຕຸລາ-ທັນວາ). **"ການວິໄຈໃນຊັ້ນຮຽນ."** ວາລະສານການວິໄຈທາງການສຶກສາ. ບັນດິດວິທະຍາໄລ ມະຫາວິທະຍາໄລສຣີນະຄຣິນວິໂຣດ.

ກະຊວງສຶກສາທິການ ແລະ ກິລາ. (2001. ໜ້າທີ 1-3). **ການວິໄຈພາກປະຕິບັດ.** ນະຄອນຫຼວງວຽງຈັນ : Nhan Dan Printing House. 2002.

ວັຊຣະ ເລົ່າຮຽນດີ. (ພ.ສ. 2550). **ການນິເທດການສອນ.** ນະຄອນປະຖົມ : ໂຮງພິມມະຫາວິທະຍາໄລສິລະປະກອນ.

ອໍລະວັນ ເໜືອນສຸດໃຈ. (ພ.ສ. 2545). **ການນິເທດການສອນແບບເພື່ອນຊ່ວຍເພື່ອນເພື່ອພັດທະນາສະມັດຖະນະການວິໄຈໃນຊັ້ນຮຽນສໍາລັບຄູພາສາອັງກິດລະດັບມັດທະຍົມ.** ວິທະຍານິພົນ. ປຣິນຍາເອກ. (ສາຂາຫຼັກສູດການສອນ ແລະ ການນິເທດ). ນະຄອນປະຖົມ : ບັນດິດວິທະຍາໄລ ມະຫາວິທະຍາໄລສິລະປະກອນ.

ພູນລາບທະວີ. ກ. & ແສງພະທິບຕົງ. ວ. (2002). ການເຮັດການວິໄຈພາກປະຕິບັດຂອງຄູໃນການປະຕິຮູບໂຮງຮຽນເພື່ອຄຸນນະພາບຂອງການຮຽນຮູ້ຂອງຜູ້ຜູ້ຮຽນ. ກຣຸງເທພມະຫານະຄອນ : ໂຮງພິມຜູ້ອໍານວຍການໃຫຍ່ສະພາການສຶກສາ.

ມິນສິດ ສິດທິສົມບູນ. (2006). ການພັດທະນາຫຼັກສູດຝຶກອົບຮົມການວິໄຈພາກປະຕິບັດ. ດາວໂລດເມື່ອວັນທີ 4 ທັນວາ 2018 ຈາກ www.moe.go.th./wijai/curiculum%classroom.

Good, C.V. (1973). Dictionary of Education. New York : McGraw-Hill Book Company, Inc.,